**ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ,**
**ສາຂາປະເທດລາວ**
**ເອກະສານລາຍງານການເງິນ**
**ສຳລັບປີການບັນຊີສິ້ນສຸດ**
**31 ທັນວາ 2021**
**ແລະ**
**ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ**

ເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບບັນຊີສະບັບນີ້ແມ່ນຖືກລາຍງານເປັນພາສາອັງກິດ. ສ່ວນສະບັບພາສາລາວ ແມ່ນເປັນພຽງສະບັບສົມທຽບເທົ່ານັ້ນ, ໃນກໍລະນີທີ່ບໍ່ສອດຄ່ອງ ແມ່ນຈະຍຶດຖືສະບັບພາສາອັງກິດເປັນຕົວຫຼັກ.

The Financial Statements and Independent Auditor’s Report have been prepared in English. The Lao version is reference only; in case of discrepancies, the English version shall prevail.

# ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ

**ສາລະບານ** **ໜ້າ**


| | |
|---|---|
| ຂໍ້ມູນທົ່ວໄປກ່ຽວກັບທະນາຄານ | 1 |
| ບົດລາຍງານສະພາຜູ້ບໍລິຫານ | 2-3 |
| ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ | 4-6 |
| ໃບລາຍງານຖານະການເງິນ | 7-8 |
| ໃບລາຍງານກຳໄລ ຫຼື ຂາດທຶນ ແລະ ລາຍຮັບອື່ນໆ | 9-10 |
| ໃບລາຍງານສ່ວນປ່ຽນແປງທຶນຂອງສຳນັກງານໃຫຍ່ | 11 |
| ໃບລາຍງານກະແສເງິນສົດ | 12-13 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 14-43 |

## ຂໍ້ມູນທົ່ວໄປກ່ຽວກັບທະນາຄານ

**ທະນາຄານ** ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ

**ໃບອະນຸຍາດລົງທຶນຕ່າງປະເທດ**
**ເລກທີ** 007-15/ຜທ/ລທ4, ລົງວັນທີ 08 ທັນວາ 2015
ໃບທະບຽນວິສາຫະກິດເລກທີ 05/ທຫລ ວັນທີ 21 ມັງກອນ 2019

**ຄະນະຜູ້ບໍລິຫານ**

| | |
|---|---|
| ທ່ານ ນາງ ຄາລີ ເຣັນຊີ | ຜູ້ອຳນວຍການ |
| ທ່ານ ນາງ ສຸພະຈັນ ຄັນສີລາ | ຫົວໜ້າຝ່າຍດຳເນີນງານ |
| ທ່ານ ນາງ ປີຕາ ກາດເນີ | ຫົວໜ້າຝ່າຍບໍລິຫານຄວາມສ່ຽງ |
| ທ່ານ ວິໄລສັກ ສີວິໄລ | ຫົວໜ້າພະແນກການເງິນ |
| ທ່ານ ເອກອານັນ ແກ້ວສຸວັດ | ຮັກສາການຫົວໜ້າພະແນກການເງິນເພື່ອທຸລະກິດ |
| ທ່ານ ນາງ ນັນທະລາ ສາລີຈັນ | ຫົວໜ້າພະແນກການຄຸ້ມຄອງເງິນທຶນ |
| ທ່ານ ນາງ ມຸກດາໄລ ໄຊຍະລາດ | ຫົວໜ້າພະແນກບຸກຄະລາກອນ |
| ທ່ານ ນາງ ສິມວອນ ສີອາໄພ | ຫົວໜ້າພະແນກລະບຽບການ |

**ທີ່ຕັ້ງສຳນັກງານໃຫຍ່** **ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ**
33 ຖະໜົນລ້ານຊ້າງ
ຕູ້ ປ.ນ 5001
ນະຄອນຫຼວງວຽງຈັນ, ສປປ ລາວ

**ຜູ້ກວດສອບ**

ບໍລິສັດ ເຄພີເອັມຈີລາວ ຈຳກັດ
ຊັ້ນ 10, ອາຄານ ໂຣໂຢລສະແຄລ
ຖະໜົນ ສາມແສນໄທ, ບ້ານ ຫນອງດ້ວງເໜືອ,
ເມືອງ ສີໂຄດຕະບອງ, ຕູ້ ປ.ນ. 6978,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : +856 (21) 454240-7

## ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ກັບເອກະສານລາຍງານການເງິນ

ຜູ້ບໍລິຫານ ຂອງກຸ່ມທະນາຄານ ອົດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ ແມ່ນມີຄວາມຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນເພື່ອຮັບປະກັນວ່າເອກະສານລາຍງານການເງິນໄດ້ຖືກກະກຽມ ເພື່ອຮັບປະກັນວ່າເອກະສານລາຍງານການເງິນໄດ້ຖືກນຳສະເໜີຢ່າງເປັນທຳ ໃນທຸກໆຫຼັກການ,ໃບລາຍງານຖານະການເງິນຂອງທະນາຄານໃນວັນທີ 31 ທັນວາ 2021 ,ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານສ່ວນປ່ຽນແປງທຶນຂອງສຳນັກງານໃຫຍ່ ແລະ ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດ ວັນທີ່ 31 ທັນວາ 2021 ໂດຍສອດຄ່ອງກັບລະບຽບການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ. ໃນການກະກຽມເອກະສານລາຍງານການເງິນຜູ້ບໍລິຫານຂອງທະນາຄານ ຕ້ອງໄດ້ປະຕິບັດດັ່ງນີ້:

i) ນຳໃຊ້ຫຼັກການບັນຊີທີ່ເໝາະສົມ, ເຊິ່ງໄດ້ຈາກການນຳໃຊ້ວິຈາລະນະຍານ ແລະການຄາດຄະເນ ຢ່າງສົມເຫດສົມຜົນ, ຮອບຄອບ ແລະ ນຳໃຊ້ຢ່າງຕໍ່ເນື່ອງ;

ii) ປະຕິບັດຕາມລະບຽບຫຼັກການບັນຊີ ຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີວິສາຫະກິດ ໃນ ສປປ ລາວ, ໃນກໍລະນີຫາກມີຄວາມແຕກຕ່າງດ້ານຜົນປະໂຫຍດ ໃນການນຳສະເໜີຕາມຄວາມເປັນຈິງ ເພື່ອໃຫ້ແນ່ໃຈວ່າເອກະສານລາຍງານເຫຼົ່ານີ້ ໄດ້ເປີດເຜີຍຂໍ້ມູນຢ່າງເໝາະສົມ, ພ້ອມອະທິບາຍໃຫ້ເຫດຜົນຕົວຈິງທີ່ສົມເຫດສົມຜົນໃນເອກະສານລາຍງານການເງິນ;

iii) ເກັບຮັກສາເອກະສານຫຼັກຖານການບັນທຶກບັນຊີຢ່າງເໝາະສົມພຽງພໍແລະສ້າງລະບົບການຄວບຄຸມພາຍໃນໃຫ້ມີປະສິດທິພາບ;

iv) ດຳເນີນການຂັ້ນຕອນທີ່ເໝາະສົມ ເພື່ອປົກປ້ອງຊັບສິນຂອງທະນາຄານ ແລະ ເພື່ອປົກປ້ອງ ແລະກວດສອບການສໍ້ສໍ້ໂກງ ຂໍ້ຜິດພາດ ແລະ ຄວາມປົກກະຕິອື່ນໆ;

v) ກະກຽມເອກະສານລາຍງານການເງິນ ບົນພື້ນຖານຫຼັກການຄວາມສືບເນື່ອງເວັ້ນເສຍແຕ່ວ່າບໍ່ມີຄວາມເໝາະສົມທີ່ຈະຄາດຄະເນວ່າ ທະນາຄານຈະດຳເນີນການຕໍ່ໄປໃນອານາຄົດອັນໃກ້ໄດ້; ແລະ

vi) ຄວບຄຸມ ແລະ ຊີ້ນຳທະນາຄານຢ່າງມີປະສິດທິພາບ ແລະ ເຂົ້າຮ່ວມ ໃນທຸກໆການຕັດສິນໃຈ ທີ່ມີສາລະສຳຄັນ ທີ່ມີຜົນກະທົບຕໍ່ການດຳເນີນງານ ແລະຜົນປະກອບການຂອງທະນາຄານ ແລະ ແນ່ໃຈວ່າເອກະສານລາຍງານການເງິນແມ່ນສອດຄ່ອງກັບຜົນໄດ້ຮັບຂອງການຕັດສິນໃຈດັ່ງກ່າວ.

ບໍລິຫານຂອງທະນາຄານໄດ້ຢັ້ງຢືນວ່າ ທະນາຄານໄດ້ປະຕິບັດຢ່າງສອດຄ່ອງຕາມຂໍ້ກຳນົດທີ່ໄດ້ກ່າວມາຂ້າງເທິງໃນການກະກຽມເອກະສານລາຍງານການເງິນ.

ANZ

**ການອະນຸມັດ ເອກະສານລາຍງານການເງິນ**

ຂ້າພະເຈົ້າ, ທ່ານ ນາງ. ສຸພະຈັນ ຄັນສີລາ ໃນນາມຕາງໜ້າ ຄະນະຜູ້ບໍລິຫານ ຂໍຊີ້ແຈງວ່າ ເອກະສານລາຍງານການເງິນທີ່ລະບຸໃນໜ້າ 7 ເຖິງໜ້າ 43 ແມ່ນ ຖືກນຳສະເໜີຢ່າງເປັນທຳ ໃນທຸກໆຫຼັກການ, ໃບລາຍງານຖານະການເງິນຂອງທະນາຄານໃນວັນທີ 31 ທັນວາ 2021 ,ໃບລາຍງານຜົນການດຳເນີນງານ ແລະ ໃບລາຍງານສ່ວນປ່ຽນແປງທຶນຂອງສຳນັກງານໃຫຍ່ ແລະໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດ ວັນທີ່ 31 ທັນວາ 2021 ໂດຍສອດຄ່ອງກັບລະບຽບການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ.

*ເຊັນໃນນາມຕາງໜ້າຂອງຄະນະບໍລິຫານ:*

ທະນາຄານ ແຫ່ງ ສປປ ລາວ
ກຸ່ມທະນາຄານ ອົດສະຕາລີ ແລະ ນິວຊີແລນ ຈຳກັດ ສາຂາລາວ
Australia and New Zealand Banking Group Limited, Lao Branch
ນະຄອນ ຫຼວງ ວຽງຈັນ

ທ່ານ ນາງ ສຸພະຈັນ ຄັນສີລາ
ຮັກສາການຜູ້ອຳນວຍການ
24 ມິນາ 2022

33 ຖະໜົນ ລ້ານຊ້າງ, ຕູ້ ປນ 5001, ນະຄອນຫຼວງວຽງຈັນ, ສປປ ລາວ | ໂທ: (+856 21) 222 700 | ແຟັກ: (+856 21) 213 513 | ອີເມວ: customercare.laos@anz.com
ສະວິບ ANZBALALA
33 Lane Xang Avenue PO Box 5001, Vientiane, Lao PDR | **T.** (+856 21) 222 700 | **F.** (+856 21) 213 513 | **E.** customercare.laos@anz.com
SWIFT ANZBALALA

KPMG Lao Co., Ltd.
10th Floor, Royal Square Office Building,
Samsenthai Road, Nongduong Nua Village,
Sikhotabong District, P.O.Box 6978,
Vientiane, Lao PDR
Tel +856 (21) 454240-7
Website home.kpmg/la

ບໍລິສັດ ເຄພີເອັມຈີລາວ ຈຳກັດ
ຊັ້ນ 10, ອາຄານ ໂຣໂຢລສະແຄລ
ຖະໜົນ ສາມແສນໄທ, ບ້ານ ໜອງດ້ວງເໜືອ,
ເມືອງ ສີໂຄດຕະບອງ, ຕູ້ ປ.ນ. 6978,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : +856 (21) 454240-7
ເວັບໄຊ : home.kpmg/la

## ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ

## ເຖິງ: ທີມງານອາວຸໂສບໍລິຫານ ຂອງກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ

*ຄວາມຄິດເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນຂອງ ຂອງກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນ ຈຳກັດ, ສາຂາປະເທດລາວ ("ສາຂາ") ເຊິ່ງປະກອບມີ ໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2021, ໃບລາຍງານຜົນການດຳເນີນງານ, ສ່ວນປ່ຽນແປງທຶນຂອງສຳນັກງານໃຫຍ່ ແລະ ກະແສເງິນສົດ ສຳລັບປີການບັນຊີສິ້ນສຸດມື້ດຽວກັນ ແລະ ບົດອະທິບາຍ ຊຶ່ງປະກອບດ້ວຍສັງລວມນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍແບບເພີ່ມເຕີມອື່ນໆ. ສາຂາເປັນສ່ວນໜຶ່ງຂອງ ກຸ່ມທະນາຄານ ອິດສະຕາລີ ແລະ ນິວຊີແລນ ຈຳກັດ ແລະ ບໍ່ໄດ້ແຍກອອກເປັນນິຕິບຸກຄົນ. ເອກະສານລາຍງານການເງິນ ໄດ້ຖືກກະກຽມຈາກການບັນທຶກຂອງສາຂາ ແລະ ສະທ້ອນໄດ້ເຖິງການເຮັດທຸລະກຳທີ່ບັນທຶກໄວ້ໃນທ້ອງຖິ່ນເທົ່ານັ້ນ.

ໃນຄວາມຄິດເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນ ແມ່ນໄດ້ນຳສະເໜີຖານະການເງິນ ຂອງສາຂາ ນະວັນທີ 31 ທັນວາ 2021 ແລະ ຜົນການດຳເນີນງານ ແລະ ກະແສເງິນສົດ ສຳລັບປີການບັນຊີສິ້ນສຸດມື້ດຽວກັນ ແມ່ນສອດຄ່ອງຢ່າງສົມເຫດສົມຜົນໃນທຸກສາລະສຳຄັນກັບລະບຽບການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ.

*ພື້ນຖານການໃຫ້ຄວາມຄິດເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບບັນຊີ ຕາມມາດຕະຖານການກວດສອບບັນຊີສາກົນ ("ISAs"). ຄວາມຮັບຜິດ ຊອບຂອງພວກຂ້າພະເຈົ້າໄດ້ກ່າວໄວ້ໃນສ່ວນຂອງ ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີຕໍ່ເອກະສານລາຍງານການເງິນ ໃນບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າມີຄວາມເປັນອິດສະລະ ຈາກສາຂາຕາມຂໍ້ກຳນົດກົດຈັນຍາບັນສາກົນຂອງຜູ້ປະກອບການວິຊາຊີບບັນຊີ ທີ່ກຳນົດໂດຍຄະນະກຳມະການຈັນຍາບັນສາກົນສຳລັບນັກບັນຊີ (ລວມທັງມາດຕະຖານອິດສະລະສາກົນ) (IESBA Code) ພ້ອມກັບກົດຈັນຍາບັນອື່ນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ, ແລະ ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆ ເຊິ່ງເປັນໄປຕາມຂໍ້ກຳນົດເຫຼົ່ານັ້ນ. ພວກຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບພຽງພໍ ແລະ ເໝາະສົມເພື່ອໃຊ້ເປັນເກນໃນການສະແດງຄຳເຫັນຂອງພວກຂ້າພະເຈົ້າ.

*ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ*

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງຕາມລະບຽບຫຼັກການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ ແລະ ສຳລັບ ການຄວບຄຸມພາຍໃນ ທີ່ຜູ້ບໍລິຫານພິຈາລະນາວ່າຈຳເປັນ ເພື່ອໃຫ້ສາມາດກະກຽມເອກະສານລາຍງານການເງິນທີ່ປາສະຈາກການສະແດງຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງ ອັນເປັນສາລະສຳຄັນ ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

KPMG Lao Company Limited, a Lao limited liability company and a member firm of the KPMG global organization of independent member firms affiliated with KPMG International Limited, a private English company limited by guarantee

KPMG

ໃນການກະກຽມເອກະສານລາຍງານການເງິນ ຜູ້ບໍລິຫານມີຄວາມຮັບຜິດຊອບ ໃນການປະເມີນຄວາມສາມາດຂອງສາຂາໃນການດໍາເນີນງານຢ່າງຕໍ່ເນື່ອງ, ການເປີດເຜີຍ, ຕາມຄວາມເໝາະສົມ ແລະ ເລື່ອງທີ່ກ່ຽວຂ້ອງກັບການດໍາເນີນງານຢ່າງຕໍ່ເນື່ອງ ແລະ ການນໍາໃຊ້ຫຼັກການບັນຊີກ່ຽວຂ້ອງກັບການດໍາເນີນງານຢ່າງຕໍ່ເນື່ອງ ເວັ້ນເສຍແຕ່ ຜູ້ບໍລິຫານມີຈຸດປະສົງທີ່ຈະຍົກເລີກ ຫຼື ຢຸດການດໍາເນີນງານ ຫຼື ບໍ່ສາມາດດໍາເນີນງານຕໍ່ເນື່ອງໄປໄດ້.

*ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີ ຕໍ່ການກວດສອບເອກະສານລາຍງານການເງິນ*

ຈຸດປະສົງຂອງພວກຂ້າພະເຈົ້າເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍ ລວມແມ່ນປາສະຈາກການບິດເບືອນຂໍ້ມູນຈາກຄວາມເປັນຈິງອັນເປັນສາລະສໍາຄັນ ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ອອກບົດລາຍງານຂອງຜູ້ກວດສອບບັນຊີ ເຊິ່ງລວມຄວາມເຫັນຂອງພວກຂ້າພະເຈົ້າ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນລະດັບສູງ ແຕ່ບໍ່ໄດ້ເປັນການຮັບປະກັນວ່າ ການດໍາເນີນການກວດສອບຕາມມາດຕະຖານການກວດສອບສາກົນ ຈະສາມາດກວດພົບຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະສໍາຄັນທີ່ມີຢູ່ໄດ້ສະເໝີ. ຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງ ອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າມີສາລະສໍາຄັນ ຖ້າວ່າແຕ່ລະລາຍການ ຫຼື  ຫຼາຍລາຍການລວມກັນ, ພວກມັນອາດມີຜົນກະທົບຕໍ່ການຕັດສິນໃຈ ທາງເສດຖະກິດ ຂອງຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ອີງຕາມມາດຕະຖານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ດຸນພິນິດ ແລະ ວິຈາລະນະຍານ ທາງວິຊາການຢ່າງເປັນມືອາ ຊີບຕະຫຼອດໄລຍະການກວດສອບ, ພ້ອມນີ້ ພວກຂ້າພະເຈົ້າຍັງໄດ້:

- ກໍານົດ ແລະ ປະເມີນຄວາມສ່ຽງຈາກການສະແດງຂໍ້ມູນທີ່ຂັດຕໍ່ຂໍ້ເທັດຈິງ ອັນເປັນສາລະສໍາຄັນໃນເອກະສານລາຍງານການເງິນ, ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ການອອກແບບ ແລະ ປະຕິບັດຕາມຂັ້ນຕອນຂອງການກວດສອບ ເພື່ອຮັບມືກັບຄວາມສ່ຽງເຫຼົ່ານັ້ນ ແລະ ໄດ້ຮັບຫຼັກຖານໃນການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນເກນໃນການສະແດງຄວາມເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການກວດສອບບໍ່ພົບຂໍ້ຜິດພາດທີ່ມີສາລະສໍາຄັນ ທີ່ເກີດຈາກການສໍ້ໂກງສູງກວ່າຂໍ້ຜິດ ພາດອັນເນື່ອງມາຈາກການສໍ້ໂກງທີ່ອາດຈະກ່ຽວກັບການສົມຮູ້ຮ່ວມຄິດ, ການປອມແປງເອກະສານຫຼັກຖານ, ລະເລີຍໂດຍເຈດຕະນາ, ບິດເບືອນຈາກຄວາມຈິງ ຫຼື ການແຊກແຊງການຄວບຄຸມພາຍໃນ.
- ທໍາຄວາມເຂົ້າໃຈຕໍ່ການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ໃນການອອກແບບຂັ້ນຕອນການກວດສອບທີ່ມີຄວາມເໝາະສົມຕາມສະຖານະການ, ແຕ່ບໍ່ແມ່ນສໍາລັບຈຸດປະສົງຂອງການສະແດງຄວາມເຫັນກ່ຽວກັບປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານໄດ້.
- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ຖືກນໍາໃຊ້ ແລະ ຄວາມສົມເຫດສົມຜົນຂອງການປະເມີນການບັນຊີ ແລະ ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ເຮັດໂດຍຜູ້ບໍລິຫານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງຫຼັກການບັນຊີທີ່ນໍາໃຊ້ ສໍາລັບການດໍາເນີນງານຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຈາກຫຼັກຖານການກວດສອບທີ່ໄດ້ຮັບ, ສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ມີສາລະສໍາຄັນກ່ຽວກັບເຫດການ ຫຼື ສະຖານະການທີ່ອາດເປັນເຫດໃຫ້ເກີດຂໍ້ສົງໄສຢ່າງມີສາລະສໍາຄັນຕໍ່ຄວາມສາມາດຂອງທະນາຄານໃນການດໍາເນີນງານຕໍ່ເນື່ອງ. ຖ້າຫາກວ່າພວກຂ້າພະເຈົ້າໄດ້ຂໍ້ສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ມີສາລະສໍາຄັນ, ພວກຂ້າພະເຈົ້າຕ້ອງໄດ້ກ່າວໄວ້ໃນ ບົດລາຍງານຂອງຜູ້ກວດສອບບັນຊີອີດສະລະເຖິງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງໃນບົດລາຍງານຖານະການເງິນ ຫຼື ຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍຄວາມເຫັນຂອງພວກຂ້າພະເຈົ້າຈະປ່ຽນໄປ, ບົດສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງໃສ່ຫຼັກຖານການກວດສອບທີ່ໄດ້ຮັບເຖິງວັນທີຂອງບົດລາຍງານ. ຢ່າງໃດກໍຕາມເຫດການ ຫຼື ເງື່ອນໄຂໃນອະນາຄົດ ອາດຈະເຮັດໃຫ້ທະນາຄານຢຸດການດໍາເນີນງານຕໍ່ເນື່ອງ.

KPMG

- ການປະເມີນຜົນການນຳສະເໜີໂດຍລວມ, ໂຄງປະກອບ ແລະ ເນື້ອໃນຂອງເອກະສານລາຍງານການເງິນ ລວມທັງການເປີດເຜີຍຂໍ້ມູນ ແລະ ການນຳສະເໜີເອກະສານລາຍງານການເງິນ, ການສະແດງລາຍການ ແລະ ເຫດການໃນຮູບແບບທີ່ເຮັດໃຫ້ມີການນຳສະເໜີຂໍ້ມູນໂດຍຖືກຕ້ອງຕາມທີ່ຄວນ.

ພວກຂ້າພະເຈົ້າຕິດຕໍ່ກັບຜູ້ບໍລິຫານກ່ຽວກັບໃນເລື່ອງອື່ນໆ, ຂອບເຂດການວາງແຜນ ແລະ ກຳນົດເວລາໃນການກວດສອບ ຕາມທີ່ໄດ້ວາງແຜນໄວ້ປະເດັນທີ່ມີສາລະສຳຄັນ, ລວມເຖິງຂໍ້ບົກຜ່ອງທີ່ມີສາລະສຳຄັນໃນລະບົບການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າອາດກວດພົບ ໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

KPMG Lao Co. Ltd

ບໍລິສັດ ເຄພີເອັມຈີລາວ ຈຳກັດ KPMG LAO CO., LTD

**ບໍລິສັດ ເຄພີເອັມຈີ ລາວ ຈຳກັດ.**

ນະຄອນຫຼວງວຽງຈັນ, ສປປ ລາວ

ວັນທີ: 24 ມີນາ 2022

# ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ

**ໃບລາຍງານຖານະການເງິນ**
**ສຳລັບສິ້ນສຸດປີ ວັນທີ 31 ທັນວາ 2021**

| | ເອກະສານ ຊ້ອນທ້າຍ | 2021 ກີບ *(ລ້ານ)* | 2020 ກີບ *(ລ້ານ)* |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ | *4, 22* | 10.065 | 5.076 |
| ທຸລະກຳລະຫວ່າງປະເທດ ແລະ ຕະຫຼາດການເງິນ | *5* | 281.222 | 500.263 |
| ເງິນຝາກຢູ່ສຳນັກງານໃຫຍ່ ແລະ ສາຂາອື່ນ | *22* | 1.956 | *96.192* |
| ເງິນຝາກຢູ່ທະນາຄານອື່ນ | *22* | 279.266 | *404.071* |
| ເງິນຝາກຕາມລະບຽບການ ກັບທະນາຄານກາງ | *6* | 87.379 | 85.462 |
| ເງິນກູ້ ແລະ ເງິນລ່ວງໜ້າ, ສຸດທິ ເງິນແຮ | *7* | 645.377 | 525.486 |
| ຊັບສິນບັດຄັງທີ່ມີຕົວຕົນ | *8* | 1.947 | 2.486 |
| ສິດນຳໃຊ້ຊັບສິນ | *9* | 3.854 | 5.444 |
| ຊັບສິນອາກອນລໍຖ້າສະສາງ | *10* | - | 10 |
| ຊັບສິນອື່ນໆ | *11* | 37.043 | 11.284 |
| **ລວມຍອດຊັບສິນ** | | **1.066.887** | **1.135.511** |

## ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ

ໃບລາຍງານຖານະການເງິນ

**ສຳລັບສິ້ນສຸດປີ ວັນທີ 31 ທັນວາ 2021**

| | ເອກະສານ ຊ້ອນທ້າຍ | 2021 ກີບ *(ລ້ານ)* | 2020 ກີບ *(ລ້ານ)* |
|---|---|---|---|
| **ໜີ້ສິນ, ທຶນ ແລະ ຄັງສຳຮອງ** | | | |
| **ໜີ້ສິນ** | | | |
| ເງິນຝາກຈາກລູກຄ້າ | *12* | 586.455 | 732.138 |
| ທຸລະກຳລະຫວ່າງປະເທດ ແລະ ຕະຫຼາດການເງິນ | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | *13* | - | 9.234 |
| ໜີ້ສິນທາງອາກອນ | *14* | 9.424 | 2.659 |
| ໜີ້ສິນສັນຍາເຊົ່າ | | 3.700 | 5.243 |
| ໜີ້ສິນອື່ນໆ | *15* | 40.798 | 18.520 |
| **ລວມໜີ້ສິນ** | | **640.377** | **767.794** |
| **ທຶນ ແລະ ຄັງສຳຮອງອື່ນໆ** | | | |
| ທຶນຈົດທະບຽນທີ່ຖອກແລ້ວ | *16* | 300.000 | 300.000 |
| ຄັງສຳຮອງຕາມລະບຽບການ | *17* | 15.421 | 9.600 |
| ເງິນແຮສຳຮອງທົ່ວໄປສຳລັບກິດຈະກຳສິນເຊື່ອ | | 3.165 | 2.579 |
| ກຳໄລສະສົມ | | 107.924 | 55.538 |
| ລວມຍອດທຶນ ແລະ ຄັງສຳຮອງອື່ນໆ | | **426.510** | **367.717** |
| **ລວມໜີ້ສິນ, ທຶນ ແລະ ຄັງສຳຮອງອື່ນໆ** | | **1.066.887** | **1.135.511** |

ເອກະສານຊ້ອນທ້າຍ ລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນນີ້.

## ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ

### ໃບລາຍງານຜົນການດຳເນີນງານ
### ສຳລັບສິ້ນສຸດປີ ວັນທີ 31 ທັນວາ 2021

| | ເອກະສານຊ້ອນທ້າຍ | 1 ມັງກອນ ເຖິງ 31 ທັນວາ 2021 *(ລ້ານກີບ)* | 1 ມັງກອນ ເຖິງ 31 ທັນວາ 2020 *(ລ້ານກີບ)* |
|---|---|---|---|
| **ລາຍຮັບຈາກດອກເບ້ຍ** | | | |
| ດອກເບ້ຍຈາກເງິນກູ້ຢືມ ແລະ ເງິນລ່ວງໜ້າ | *18* | 25.430 | 19.772 |
| ດອກເບ້ຍຈາກທຸລະກຳລະຫວ່າງປະເທດ ແລະ ຕະຫຼາດການເງິນ | | 23 | 581 |
| **ລວມລາຍຮັບດອກເບ້ຍ** | | **25.453** | **20.353** |
| **ລາຍຈ່າຍດອກເບ້ຍ** | | | |
| ດອກເບ້ຍເງິນຝາກ | *19* | (1.961) | (2.053) |
| ດອກເບ້ຍເງິນ ທຸລະກຳລະຫວ່າງປະເທດ ແລະ ຕະຫຼາດການເງິນ | | (223) | (425) |
| ດອກເບ້ຍເງິນກູ້ຢືມລະຫວ່າງທະນາຄານໃນເຄືອ | | - | (4.832) |
| **ລວມລາຍຈ່າຍດອກເບ້ຍ** | | **(2.184)** | **(7.310)** |
| **ລາຍຮັບດອກເບ້ຍສຸດທິ** | | **23.269** | **13.043** |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | | 4.918 | 5.274 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | | (459) | (393) |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ສຸດທິ** | *20* | **4.459** | **4.881** |
| **ລາຍຮັບອື່ນໆ** | | | |
| ກຳໄລຈາກການແລກປ່ຽນເງິນຕາ | | 72.231 | 56.775 |
| ລາຍຮັບອື່ນໆ | | 524 | 668 |
| ກຳໄລ(ຂາດທຶນ)ສຸດທິຈາກການສະສາງຊັບສົມບັດຄົງທີ່ | | - | 59 |
| **ລວມລາຍຮັບອື່ນໆ** | | **72.755** | **57.502** |
| **ລາຍຮັບກ່ອນລາຍຈ່າຍທີ່ບໍ່ແມ່ນດອກເບ້ຍ, ບັນທຶກໜີ້ເສຍ ແລະ ລາຍຈ່າຍອາກອນກຳໄລ** | | **100.483** | **75.426** |

# ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ

**ໃບລາຍງານຜົນການດຳເນີນງານ**

**ສຳລັບສິ້ນສຸດປີ ວັນທີ 31 ທັນວາ 2021**

| | | | |
|---|---|---|---|
| **ລາຍຈ່າຍໃນການດຳເນີນງານ** | | | |
| ລາຍຈ່າຍສ່ວນບຸກຄົນ | | (17.311) | (12.511) |
| ລາຍຈ່າຍຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມ | | (2.349) | (2.845) |
| ລາຍຈ່າຍອື່ນໆ | | (6.546) | (15.290) |
| ເງິນແຮສຳລັບໜີ້ສູນ ແລະ ໜີ້ສົງໄສ ເງິນ ແລະ ເງິນລ່ວງໜ້າ | | | |
| ເງິນແຮທົ່ວໄປ | | (586) | (710) |
| ເງິນແຮສະເພາະ | | - | (4.653) |
| **ລວມລາຍຈ່າຍການດຳເນີນງານ** | | **(26.792)** | **(36.009)** |
| **ກຳໄລກ່ອນຈ່າຍອາກອນກຳໄລ** | | **73.691** | **39.417** |
| **ລາຍຈ່າຍອາກອນກຳໄລ** | *21* | (15.484) | (8.468) |
| **ກຳໄລໃນປີ** | | **58.207** | **30.949** |

ເອກະສານຊ້ອນທ້າຍ ລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນນີ້.

**ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ**
**ໃບລາຍງານສ່ວນປ່ຽນແປງທຶນຂອງສຳນັກງານໃຫຍ່**
**ສຳລັບສິ້ນສຸດປີ ວັນທີ 31 ທັນວາ 2021**

| | ທຶນຈົດທະບຽນ ຖອກແລ້ວ<br>*(ລ້ານກີບ)* | ກຳໄລສະສົມ<br>*(ລ້ານກີບ)* | ຄັງສຳຮອງຕາມ ລະບຽບການ<br>*(ລ້ານກີບ)* | ເງິນແຮທົ່ວໄປ ສຳລັບ ສິນເຊື່ອ<br>*(ລ້ານກີບ)* | ລວມ<br>*(ລ້ານກີບ)* |
|---|---|---|---|---|---|
| **ຍອດເຫຼືອ ວັນທີ 31 ທັນວາ 2019 ແລະ 1 ມັງກອນ 2020** | **150.000** | **27.727** | **3.081** | **1.869** | **182.677** |
| ໂອນມາຈາກສາຂາ ຂອງ ກຸ່ມທະນາຄານ ອິດສະຕາລີ ແລະ ນິວຊີແລນຈຳກັດ | 150.000 | (43) | 3.424 | - | 153.381 |
| ປ່ຽນແປງໃນເງິນແຮທົ່ວໄປ | - | | - | 710 | 710 |
| ກຳໄລໃນປີ | - | 30.949 | - | - | 30.949 |
| ໂອນໄປຄັງສະສົມຕາມລະບຽບການ | - | (3.095) | 3.095 | - | - |
| **ຍອດເຫຼືອ 31 ທັນວາ 2020 ແລະ 1 ມັງກອນ 2021** | **300.000** | **55.538** | **9.600** | **2.579** | **367.717** |
| ປ່ຽນແປງໃນເງິນແຮທົ່ວໄປ | - | - | - | 586 | 586 |
| ກຳໄລໃນປີ | - | 58.207 | - | - | 58.207 |
| ໂອນໄປຄັງສະສົມຕາມລະບຽບການ | - | (5.821) | 5.821 | - | - |
| **ຍອດເຫຼືອ 31 ທັນວາ 2021** | **300.000** | **107.924** | **15.421** | **3.165** | **426.510** |

ເອກະສານຊ້ອນທ້າຍ ລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນນີ້.

# ກຸ່ມທະນາຄານອິກສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະທດລາວ
## ໃບລາຍງານກະແສເງິນສົດ
## ສຳລັບສິ້ນສຸດປີ ວັນທີ 31 ທັນວາ 2021

| | ເອກະສານຊ້ອນທ້າຍ | 2021 *(ລ້ານກີບ)* | 2020 *(ລ້ານກີບ)* |
|---|---|---|---|
| **ກຳໄລກ່ອນຫັກອາກອນກຳໄລ** | | 73.691 | 39.417 |
| *ດັດແກ້ສຳລັບ:* | | | |
| ລາຍຮັບດອກເບ້ຍ | | (25.453) | (20.353) |
| ລາຍຈ່າຍດອກເບ້ຍ | | 2.184 | 7.310 |
| ລາຍຈ່າຍດອກເບ້ຍຂອງໜີ້ສິນສັນຍາເຊົ່າ | | 154 | 208 |
| ເງິນແຮໜີ້ສົງໄສຈະສູນ | | 586 | 5.363 |
| ຄ່າຫຼູ້ຍຫ້ຽນ ແລະ ຄ່າເຊື່ອມ | | 2.349 | 2.845 |
| (ກຳໄລ) ຈາກການສະສາງຊັບສົມບັດຄົງທີ່ | | 16 | (59) |
| **ກຳໄລ/ຂາດທຶນຈາກການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນ ຈາກການດຳເນີນງານ** | | **53.527** | **34.731** |
| **ການປ່ຽນແປງຊັບສິນ ແລະ ໜີ້ສິນຈາກການດຳເນີນງານ** | | | |
| ປ່ຽນແປງໃນເງິນຝາກຕາມລະບຽບການ | | 13.724 | (9.678) |
| ປ່ຽນແປງໃນເງິນກູ້ຢືມ ແລະ ເງິນລ່ວງໜ້າ | | (119.890) | (150.839) |
| ປ່ຽນແປງໃນຊັບສິນອື່ນໆ | | (25.122) | 874 |
| ປ່ຽນແປງເງິນຝາກຂອງລູກຄ້າ | | (145.683) | 230.185 |
| ປ່ຽນແປງໃນເງິນຝາກຈາກທະນາຄານອື່ນ | | - | 80.000 |
| ປ່ຽນແປງໃນເງິນຝາກກັບທະນາຄານອື່ນ | | (9.234) | (72.244) |
| ປ່ຽນແປງໃນໜີ້ສິນອື່ນໆ | | 22.356 | (251.625) |
| ລາຍຮັບດອກເບ້ຍ | | 24.815 | 20.485 |
| ລາຍຈ່າຍດອກເບ້ຍ | | (2.261) | (8.106) |
| ຈ່າຍອາກອນກຳໄລ | | (8.709) | (7.488) |
| **ກະແສເງິນສົດສຸດທິຈາກການດຳເນີນທຸລະກິດ** | | **(196.477)** | **(133.705)** |
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | | |
| ຊື້ຊັບສົມບັດຄົງທີ່ | | (257) | (1.254) |
| ເງິນໄດ້ຮັບຈາກການສະສາງຊັບສິນ | | 20 | 152 |
| **ເງິນສົດສຸດທິຈາກກິດຈະກຳການລົງທຶນ** | | **(237)** | **(1.102)** |

## ກຸ່ມທະນາຄານອົດສະຕາລີ ແລະ ນິວຊີແລນຈຳກັດ, ສາຂາປະເທດລາວ
**ໃບລາຍງານກະແສເງິນສົດ**
**ສຳລັບສິ້ນສຸດປີ ວັນທີ 31 ທັນວາ 2021**

| | ເອກະສານຊ້ອນທ້າຍ | 2021<br>*(ລ້ານກີບ)* | 2020<br>*(ລ້ານກີບ)* |
|---|---|---|---|
| ***ກະແສເງິນສົດຈາກກິດຈະກຳການເງິນ*** | | | |
| ຈ່າຍໜີ້ສັນຍາເຊົ່າ | | (1.697) | (1.823) |
| ປະກອບສ່ວນທຶນ | | - | 153.381 |
| ***ເງິນສົດສຸດທິຈາກກິດຈະກຳການເງິນ*** | | **(1.697)** | **151.558** |
| **ປ່ຽນແປງສຸດທິໃນເງິນສົດ ແລະ ທຽບເທົ່າເງິນສົດ** | | **(198.411)** | **16.751** |
| **ເງິນສົດ ແລະ ທຽບເທົ່າເງິນສົດ ວັນທີ 1 ມັງກອນ** | | 532.818 | 516.067 |
| **ເງິນສົດ ແລະ ທຽບເທົ່າເງິນສົດ 31 ທັນວາ** | *22* | **334.407** | **532.818** |

ເອກະສານຊ້ອນທ້າຍ ລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນນີ້.

**ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈໍາກັດ, ສາຂາປະເທດລາວ**
**ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ**
**ສໍາລັບສິ້ນສຸດປີ ວັນທີ 31 ທັນວາ 2021**

| **ເອກະສານ ຊ້ອນທ້າຍ** | **ເນື້ອໃນ** |
|---|---|
| 1 | ຂໍ້ມູນທະນາຄານ |
| 2 | ພື້ນຖານການກະກຽມເອກະສານລາຍງານການເງິນ |
| 3 | ນະໂຍບາຍການບັນຊີທີ່ສໍາຄັນ |
| 4 | ເງິນສົດ |
| 5 | ເງິນຝາກຢູ່ສໍານັກງານໃຫຍ່ ແລະ ສາຂາອື່ນ ແລະ ທະນາຄານອື່ນ |
| 6 | ເງິນຝາກຕາມລະບຽບການກັບທະນາຄານກາງ |
| 7 | ເງິນກູ້ ແລະ ເງິນລ່ວງໜ້າ, ສຸດທິ ເງິນແຮທົ່ວໄປ |
| 8 | ຊັບສິນບັດຄົງທີ່ |
| 9 | ສິດໃນການນໍາໃຊ້ຊັບສິນ |
| 10 | ຊັບສິນອາກອນເຍື່ອນຊໍາລະ |
| 11 | ຊັບສິນອື່ນໆ |
| 12 | ເງິນຝາກຈາກລູກຄ້າ |
| 13 | ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນໆ |
| 14 | ໜີ້ສິນທາງອາກອນ |
| 15 | ໜີ້ສິນອື່ນໆ |
| 16 | ທຶນຈົດທະບຽນຖອກແລ້ວ |
| 17 | ຄັງສໍາຮອງຕາມລະບຽບການ |
| 18 | ລາຍຮັບດອກເບ້ຍ |
| 19 | ລາຍຈ່າຍດອກເບ້ຍ |
| 20 | ຄ່າທໍານຽມແລະ ຄ່າບໍລິການ, ສຸດທິ |
| 21 | ລາຍຈ່າຍອາກອນກໍາໄລ |
| 22 | ເງິນສົດ ແລະ ທຽບເທົ່າເງິນສົດ |
| 23 | ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ |
| 24 | ພາລະຜູກພັນ |
| 25 | ເຫດການທີ່ເກີດຂຶ້ນພາຍຫຼັງ |
| 26 | ການປະຕິຮູບອັດຕາດອກເບ້ຍມາດຕະຖານ |

## 1 ຂໍ້ມູນທະນາຄານ

ກຸ່ມທະນາຄານອິດສະຕາລີ ແລະ ນິວຊີແລນຈໍາກັດ, ສາຂາປະເທດລາວ (“ ສາຂາ”) ເປັນສາຂາທຸລະກິດຕ່າງປະເທດລົງທຶນ 100% ເຊິ່ງສ້າງຕັ້ງຂຶ້ນໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“ ສປປ ລາວ”) ແລະ ມີສໍານັກງານຕັ້ງຢູ່ ທີ່ເລກທີ 33, ຖະໜົນລ້ານຊ້າງ, ຕູ້ໄປສະນີ 5001, ນະຄອນຫຼວງວຽງຈັນ, ສປປລາວ.

ສາຂາໄດ້ດໍາເນີນທຸລະກິດພາຍໃຕ້ໃບອະນຸຍາດການລົງທຶນຕ່າງປະເທດ ເລກທີ 05/ທຫລ ລົງວັນທີ 21 ມັງກອນ 2019 ເຊິ່ງອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ, ໃບທະບຽນວິສາຫະກິດ ເລກທີ 0213/ຈທວ ລົງວັນທີ 18 ກຸມພາ 2019 ອອກໂດຍຫ້ອງການທະບຽນວິສາຫະກິດ ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ໃບທະບຽນລົງທຶນເລກທີ 007-19/ ກຊຜທ, ລທ 4, ລົງວັນທີ 22 ພຶດສະພາ 2019 ອອກໂດຍກະຊວງແຜນການ ແລະ ການລົງທຶນ.

ກິດຈະກໍາຕົ້ນຕໍຂອງສາຂາ ແມ່ນໃຫ້ບໍລິການທາງດ້ານການທະນາຄານ ແລະ ການບໍລິການທາງດ້ານການເງິນທີ່ຄົບວົງຈອນໃນ ສປປ ລາວ.

ໃນວັນທີ 31 ທັນວາ 2021, ສາຂາ ມີພະນັກງານທັງໝົດ 33 ຄົນ.

ໃນລະຫວ່າງປີ 2021 ຈົນຮອດມື້ທີ່ອອກບົດລາຍງານ, ສາຂາທະນາຄານໄດ້ມີການປັບປຸງຜູ້ອໍານວຍການ ແລະ ຄະນະຜູ້ບໍລິຫານດັ່ງລຸ່ມນີ້:

ສະມາຊິກຄະນະຜູ້ບໍລິຫານທີ່ໄດ້ຮັບການແຕ່ງຕັ້ງ ແລະ ລາອອກ:

| ຊື່ | ຕໍາແໜ່ງ | ວັນທີ ແຕ່ງຕັ້ງ ແລະ ລາອອກ |
|---|---|---|
| ທ່ານ ນາງ ຄາລີ ເຣນຊີ | ຜູ້ອໍານວຍການ | ຖືກແຕ່ງຕັ້ງໄປປະຈໍາການທີ່ ປະເທດ ອອສເຕຣເລຍ ໃນວັນທີ 11 ມັງກອນ 2022 |
| ທ່ານ ນາງ ອາຊາ ອາລີ | ຫົວໜ້າຝ່າຍດໍາເນີນງານ | ຖືກແຕ່ງຕັ້ງໃຫ້ໄປປະຈໍາການທີ່ ປະເທດ ຟີຈີ 04 ມິຖຸນາ 2021 |
| ທ່ານ ນາງ ສຸພະຈັນ ຄັນສີລາ | ຫົວໜ້າຝ່າຍດໍາເນີນງານ | ຖືກແຕ່ງຕັ້ງໃນວັນທີ 15 ພຶດສະພາ 2021 |
| ທ່ານ ດົນອ່ານຕອນ ຫງວຽນ | ຫົວໜ້າຝ່າຍບໍລິຫານຄວາມສ່ຽງ | ສິ້ນສຸດສັນຍາໃນວັນທີ 06 ພຶດສະພາ 2021 |
| ທ່ານ ນາງ ເປຕາ ກາດເນີ | ຫົວໜ້າຝ່າຍບໍລິຫານຄວາມສ່ຽງ | ຖືກແຕ່ງຕັ້ງໃນວັນທີ 14 ພຶດສະພາ 2021 |
| ທ່ານ ເອກອານັນ ແກ້ວສຸວັດ | ຮັກສາການຫົວໜ້າພະແນກການເງິນເພື່ອທຸລະກິດ | ຖືກແຕ່ງຕັ້ງໃນວັນທີ 15 ພຶດສະພາ 2021 |

## 2. ພື້ນຖານການກະກຽມເອກະສານລາຍງານການເງິນ

### (ກ) ຫຼັກການພື້ນຖານບັນຊີທົ່ວໄປ

ສາຂາບໍ່ແມ່ນນິຕິບຸກຄົນທີ່ແຍກຕ່າງຫາກ. ດັ່ງນັ້ນ, ເອກະສານລາຍງານການເງິນທີ່ຕິດຄັດມາ ໄດ້ຖືກກະກຽມຈາກການບັນທຶກຂອງສາຂາ ແລະ ສະທ້ອນເຖິງການເຮັດທຸລະກໍາທີ່ບັນທຶກໄວ້ໃນທ້ອງຖິ່ນເທົ່ານັ້ນ.

*(i)* **ພື້ນຖານໃນການກະກຽມ**

ເອກະສານລາຍງານການເງິນທີ່ເຮັດຂຶ້ນສະແດງເປັນຫົວໜ່ວຍລ້ານລາວກີບ ("ລ້ານກີບ") ໂດຍສອດຄ່ອງກັບ ດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີແຫ່ງ ສປປລາວ ລົງວັນທີ 22 ມີນາ 2000, ກົດໝາຍບັນຊີວິສາຫະກິດ ຂອງ ສປປ ລາວ ແລະ ຫຼັກການບັນຊີຂອງທະນາຄານ ແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ. ເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງສາຂາ.

ເອກະສານລາຍງານການເງິນໄດ້ຖືກກະກຽມໃຫ້ສອດຄ່ອງກັບຫຼັກການບັນຊີຂອງທະນາຄານແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ, ເຊິ່ງອາດຈະແຕກຕ່າງຈາກການລາຍງານຕາມມາດຕະຖານ ການລາຍງານການເງິນແບບສາກົນ ແລະ ລະບຽບຫຼັກການບັນຊີທີ່ມີການຍອມຮັບ ແລະ ປະຕິບັດໃນປະເທດອື່ນໆ. ດັ່ງນັ້ນ, ເອກະສານລາຍງານການເງິນນີ້ ບໍ່ມີຈຸດປະສົງທີ່ຈະສະແດງຖານະການເງິນ, ຜົນຂອງການດຳເນີນງານ, ການປ່ຽນແປງຂອງທຶນ, ກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍຕາມຫຼັກການບັນຊີທີ່ຖືກຍອມຮັບຕາມນະໂຍບາຍບັນຊີ ແລະ ການປະຕິບັດໂດຍທົ່ວໄປໃນບັນດາປະເທດ ແລະ ຂົງເຂດອື່ນໆທີ່ນອກເໜືອຈາກ ສປປ ລາວ. ນອກຈາກນີ້, ເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ຖືກສ້າງຂຶ້ນໃຫ້ຜູ້ທີ່ບໍ່ຮູ້ກ່ຽວກັບນະໂຍບາຍບັນຊີ, ການດຳເນີນງານ ແລະ ການປະຕິບັດກົດໝາຍ ແລະ ຂໍ້ກຳນົດຂອງ ສປປ ລາວ.

ສາຂາເປັນສາຂາທຸລະກິດຕ່າງປະເທດລົງທຶນ 100% ຊຶ່ງດຳເນີນການຢູ່ໃນ ສປປ ລາວ. ເອກະສານລາຍງານການເງິນແມ່ນຖືກກະກຽມຈາກການບັນທຶກຂອງສາຂາ ແລະ ສະທ້ອນເຖິງທຸລະກຳທີ່ບັນທຶກຢູ່ພາຍໃນເທົ່ານັ້ນ, ສາຂາມີລາຍການທຸລະກຳທີ່ສຳຄັນ ແລະ ຍອດເງິນໃນບັນຊີກັບສຳນັກງານໃຫຍ່ ແລະ ສາຂາອື່ນ.

ເອກະສານລາຍງານການເງິນ ແມ່ນໄດ້ຖືກອະນຸມັດໂດຍຄະນະຜູ້ບໍລິຫານໃນວັນທີ 24 ມີນາ 2022.

*(ii)* **ພື້ນຖານການປະເມີນ**

ເອກະສານລາຍງານການເງິນແມ່ນໄດ້ກະກຽມຂຶ້ນຕາມຫຼັກການຕົ້ນທຶນເດີມ ຍົກເວັ້ນແຕ່ທີ່ໄດ້ກ່າວໄວ້ໃນນະໂຍບາຍການບັນຊີ. ນະໂຍບາຍການບັນຊີແມ່ນໄດ້ຖືກນຳໃຊ້ຢ່າງສອດຄ່ອງກັບສາຂາ

*(iii)* **ການໃຊ້ດຸນພິນິດ ແລະ ປະມານການ**

ໃນການກະກຽມເອກະສານລາຍງານການເງິນຂອງສາຂາ, ຜູ້ບໍລິຫານຕ້ອງໄດ້ໃຊ້ດຸນພິນິດ, ການປະມານ ແລະ ຂໍ້ສົມມຸດຕິຖານຫຼາຍປະການຕາມຄວາມຮູ້ເຂົ້າໃຈຂອງຄະນະຜູ້ບໍລິຫານຕໍ່ສະພາບປະຈຸບັນ ແລະ ການປະຕິບັດທີ່ມີຜົນກະທົບຕໍ່ການກຳນົດນະໂຍບາຍການບັນຊີ ແລະ ການລາຍງານຈຳນວນເງິນທີ່ກ່ຽວກັບ ຊັບສິນ, ໜີ້ສິນ, ລາຍຮັບ, ລາຍຈ່າຍ ແລະ ການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນໃນວັນທີລາຍງານ.

ການຄາດຄະເນ ແລະ ການສົມມຸດຖານ ແມ່ນໄດ້ຖືກທົບທວນຄືນຢ່າງຕໍ່ເນື່ອງ. ຜົນໄດ້ຮັບທີ່ແທ້ຈິງອາດຈະແຕກຕ່າງຈາກການປະເມີນຂອງການບໍລິຫານ ແລະ ສ່ວນແຕກຕ່າງເຫຼົ່ານັ້ນອາດຈະມີຄວາມຈຳເປັນທີ່ຈະຕ້ອງມີການແກ້ໄຂທີ່ໃຫ້ເປັນທີ່ຍອມຮັບໃນໄລຍະທີ່ການປະເມີນຖືກມີການແກ້ໄຂ ແລະ ໃນໄລຍະທີ່ຈະໄດ້ຮັບຜົນກະທົບ ໃນອະນາຄົດ.

**(ຂ) ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ**

ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດຈະຖືກປ່ຽນເປັນສະກຸນເງິນທີ່ນຳໃຊ້ໃນການດຳເນີນ ງານໃນອັດຕາແລກປ່ຽນໃນວັນທີທີ່ລາຍການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນ ທີ່ບໍ່ເປັນຕົວເງິນ ເຊິ່ງເກີດຈາກລາຍການບັນຊີທີ່ເປັນເງິນຕາຕ່າງປະເທດແປງຄ່າເປັນສະກຸນເງິນທີ່ນຳໃຊ້ໃນການດຳເນີນງານໂດຍໃຊ້ອັດຕາແລກປ່ຽນໃນວັນທີທີ່ເກີດລາຍການ. ສ່ວນແຕກຕ່າງຂອງອັດຕາແລກປ່ຽນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນແມ່ນໄດ້ຖືກນຳມາສະເໜີໃນໃບລາຍງານຜົນການດຳເນີນງານ.

ຊັບສິນ ແລະ ໜີ້ສິນ ທີ່ບໍ່ເປັນຕົວເງິນເຊິ່ງເກີດຈາກລາຍການບັນຊີທີ່ເປັນເງິນຕາຕ່າງປະເທດຊຶ່ງບັນທຶກຕາມເກນ ລາຄາທຶນເດີມແປງຄ່າເປັນສະກຸນເງິນທີ່ນຳໃຊ້ໃນການດຳເນີນງານໂດຍໃຊ້ອັດຕາແລກປ່ຽນໃນວັນທີທີ່ເກີດລາຍການ.

ອັດຕາແລກປ່ຽນເງິນກີບທີ່ນຳໃຊ້ປຽບທຽບກັບເງິນຕາຕ່າງປະເທດ ມີດັ່ງນີ້:

| | 31 ທັນວາ 2021 | 31 ທັນວາ 2020 |
|---|---|---|
| ໂດລາສະຫາລັດ (“USD”) | 11.129 | 9.252 |
| ໄທບາດ (“THB”) | 331 | 307 |
| ຢູໂຣ (“EUR”) | 12.583 | 11.326 |

**(ຄ) ປີການບັນຊີ**

ໄລຍະເວລາການລາຍງານຂອງສາຂາເລີ່ມຕັ້ງແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ.

## 3. ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍທາງດ້ານບັນຊີທີ່ສຳຄັນໄດ້ລະບຸໄວ້ດັ່ງລຸ່ມນີ້ ແມ່ນສາຂາໄດ້ນຳໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນໃນແຕ່ລະປີຢ່າງຕໍ່ເນື່ອງ.

**(ກ) ເຄື່ອງມືທາງການເງິນ**

ເຄື່ອງມືທາງການເງິນຂອງສາຂາ ປະກອບມີ ເງິນສົດ ແລະ ທຽບເທົ່າເງິນສົດ, ເງິນກູ້ທີ່ເກີດຂຶ້ນ ແລະ ໜີ້ຕ້ອງຮັບ,ເງິນຝາກ, ການລົງທຶນ, ເງິນລະຫວ່າງທະນາຄານ ແລະ ໜີ້ຕ້ອງຮັບອື່ນໆ ແລະ ໜີ້ຕ້ອງສົ່ງ. ນະໂຍບາຍການບັນຊີສຳລັບການຮັບຮູ້ ແລະ ການປະເມີນລາຍການເຫຼົ່ານີ້ ແມ່ນໄດ້ຖືກເປີດເຜີຍໄວ້ໃນບັນດານະໂຍບາຍການບັນຊີຕາມລຳດັບ.

**(ຂ) ເງິນສົດ ແລະ ທຽບເທົ່າເງິນສົດ**

ເງິນສົດ ແລະ ທຽບເທົ່າເງິນສົດປະກອບມີ: ເງິນສົດ ແລະ ເງິນລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງມີອາຍຸຄົບກຳນົດໜ້ອຍກວ່າ ຫຼື ເທົ່າກັບ 30 ວັນ, ທີ່ພ້ອມຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບເງິນຝາກທະນາຄານອື່ນທີ່ມີອາຍຸຄົບກຳນົດໜ້ອຍກວ່າ ຫຼື ເທົ່າກັບ 30 ວັນ.

**(ຄ) ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ**

ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ແມ່ນມາຈາກການສະໜອງທຶນຂອງສາຂາໃຫ້ແກ່ລູກຄ້າເພື່ອ ຈຸດປະສົງໃດໜຶ່ງທີ່ນອກເໜືອຈາກການເກັບກຳໄລໄລຍະສັ້ນ. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າແມ່ນມາຈາກຍອດຄົງເຫຼືອຫັກລົບເງິນແຮຄ່າເສື່ອມສຳລັບໜີ້ເສຍ ແລະ ໜີ້ສົງໄສຈະສູນເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ, ສະທ້ອນໃຫ້ເຫັນຍອດທີ່ສາມາດຮຽກເກັບຄືນໄດ້ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ທີ່ໄດ້ສະແດງໃຫ້ເຫັນມູນຄ່າບໍ່ລວມດອກເບ້ຍຄ້າງຮັບ.

**(ງ) ເງິນແຮສຳລັບໜີ້ເສຍ ແລະ ໜີ້ຕ້ອງສົງໃສ ແລະ ເງິນລ່ວງໜ້າ**

**ນະໂຍບາຍສິນເຊື່ອໃນຊ່ວງການແຜ່ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ສະບັບເລກທີ 238/ທຫລ ລົງວັນທີ 26 ມີນາ 2020.**

ພາຍໃນປີ ທຫລ ໄດ້ອອກໜັງສື ສະບັບເລກທີ 238/ທຫລ ລົງວັນທີ 26 ມີນາ 2020 ໂດຍມີວັດຖຸປະສົງເພື່ອຫຼຸດຜ່ອນຜົນກະທົບຈາກ COVID-19 ຕໍ່ສະຖານະການເງິນຂອງຜູ້ກູ້ຢືມ.

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ ແລະ ນິຕິບຸກຄົນ ທີ່ເປັນລູກຄ້າເງິນກູ້ທີ່ໄດ້ຮັບຜົນກະທົບຈາກພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່

1. ໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນ ເລື່ອນໄລຍະເວລາຊຳລະໜີ້ທັງຕົ້ນທຶນ ແລະ ດອກເບ້ຍ, ປັບຫຼຸດອັດຕາດອກເບ້ຍ ແລະ ຄ່າທຳນຽມໃຫ້ລູກໜີ້ ຕາມທີ່ເຫັນວ່າເໝາະສົມ.
2. ສະໜອງເງິນກູ້ບ້ວງໃໝ່ ໃຫ້ແກ່ລູກໜີ້ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດດັ່ງກ່າວ ເພື່ອຟື້ນຟູການຜະລິດ.
3. ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ໄດ້ປະຕິບັດຕາມມາດຕະການຕາມທີ່ກຳນົດໄວ້ ຈະໄດ້ຮັບນະໂຍບາຍຜ່ອນຜັນຍົກເວັ້ນການປະຕິບັດຕາມ ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ສະບັບເລກທີ 512/ທຫລ ລົງວັນທີ 29 ມິຖຸນາ 2018, ລະບຽບວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງສະຖາບັນການເງິນຈຸລະພາກ ສະບັບເລກທີ 02/ທຫລ ລົງວັນທີ 04 ກຸມພາ 2015 ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຫຍັດ ສະບັບເລກທີ 03/ທຫລ ລົງວັນທີ 20 ມິຖຸນາ 2008 ດັ່ງນີ້:

(1) ການຈັດຊັ້ນໜີ້ພາຍຫຼັງການປັບປຸງໂຄງສ້າງ ແມ່ນຮັກສາໄວ້ຊັ້ນເດີມ, ລູກໜີ້ທີ່ໄດ້ຮັບຜົນກະທົບ ທີ່ຖືກຈັດຊັ້ນໜີ້ຕ້ອງຮັບທວງຍາກ ແຕ່ວັນທີ 01 ມັງກອນ 2020 ເປັນຕົ້ນມາ ສາມາດຈັດຊັ້ນເປັນໜີ້ຄວນເອົາໃຈໃສ່;

(2) ການປັບປຸງໂຄງສ້າງໜີ້ ແມ່ນສາມາດປະຕິບັດໄດ້ເກີນ 2 ຄັ້ງ;

(3) ທະນາຄານທຸລະກິດ ແລະ ສະຖາບັນການເງິນ ສາມາດປ່ອຍສິນເຊື່ອບ້ວງໃໝ່ ເພື່ອເປັນທຶນໝູນວຽນເສີມສະພາບຄ່ອງໃຫ້ລູກໜີ້ທີ່ໄດ້ຮັບຜົນກະທົບ ທີ່ຖືກຈັດຊັ້ນເປັນໜີ້ຕ້ອງຮັບ ທວງຍາກ ແຕ່ວັນທີ 1 ມັງກອນ 2020 ເປັນຕົ້ນມາ.

**ມາດຕະການ**

1. ປັບປຸງໂຄງສ້າງໜີ້ຄືນໃໝ່ໃຫ້ແກ່ລູກຄ້າໜີ້ທີ່ໄດ້ຮັບຜົນກະທົບ ໂດຍກໍານົດອາຍຸສັນຍາ ຫຼື ງວດຊໍາລະຕົ້ນທຶນ ແລະ ດອກເບ້ຍ, ອັດຕາດອກເບ້ຍຄືນໃໝ່ ໃຫ້ສອດຄ່ອງກັບຄວາມສາມາດໃນການຊໍາລະໜີ້ຕົວຈິງຂອງລູກໜີ້. ໃນນັ້ນ, ໃຫ້ມີໄລຍະເວລາປອດໜີ້ ຕົ້ນທຶນ ແລະ ດອກເບ້ຍ ເປັນເວລາ 1 ປີ ຫຼື ຕາມການຕົກລົງລະຫວ່າງ ເຈົ້າໜີ້ ແລະ ລູກໜີ້;
2. ສະໜອງເງິນກູ້ບ້ວງໃໝ່ ໃຫ້ແກ່ລູກຄ້າໜີ້ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດດັ່ງກ່າວ;

ນະໂຍບາຍເພີ່ມເຕີມຕາມໜັງສືເລກທີ 256/ທຫລ ລົງວັນທີ 15 ພຶດສະພາ 2021.

- ໃຫ້ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນ ແລະ ບໍ່ຮັບຝາກເງິນ ເລື່ອນເວລາຊໍາລະໜີ້ທັງຕົ້ນທຶນ ແລະ ດອກເບ້ຍໃຫ້ແກ່ລູກຄ້າເງິນກູ້ (ປະເພດສິນເຊື່ອເພື່ອການຊົມໃຊ້) ເປັນເວລາ 3 ເດືອນ ນັບແຕ່ເດືອນພຶດສະພາ ຫາ ເດືອນ ກໍລະກົດ 2021 ຕາມເງື່ອນໄຂທີ່ໄດ້ກໍານົດດັ່ງລຸ່ມນີ້.

ເງື່ອນໄຂໃນການພິຈາລະນາ

- ລູກຄ້າທີ່ຈະໄດ້ຮັບນະໂຍບາຍເລື່ອນໄລຍະເວລາຊໍາລະໜີ້ຕ້ອງແມ່ນຜູ້ທີ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ COVID-19 ພາໃຫ້ບໍ່ໄດ້ຮັບເງິນເດືອນ ຫຼື ຄ່າແຮງງານ ຫຼື ໄດ້ຮັບພຽງສ່ວນໃດສ່ວນໜຶ່ງພາໃຫ້ບໍ່ສາມາດຊໍາລະໜີ້ ຫຼື ຄ່າງວດໄດ້ ໂດຍມີການຢັ້ງຢືນຈາກບ່ອນເຮັດວຽກດັ່ງກ່າວ;
- ສໍາລັບລູກຄ້າທີ່ມີແຫຼ່ງລາຍຮັບຈາກການດໍາເນີນທຸລະກິດ ທີ່ໄດ້ຮັບຜົນກະທົບຈາກພະຍາດ COVID-19 ແມ່ນພິຈາລະນາຕາມຖານະການເງິນ ແລະ ສະພາບຕົວຈິງ.

**ລະບຽບການເລກທີ 512/ທຫລ ມີຜົນບັງຄັບໃຊ້ ຕັ້ງແຕ່ວັນທີ 1 ຕຸລາ 2018.**

ອີງຕາມກົດລະບຽບການຂອງທະນາຄານ ແຫ່ງ ສປປລາວ ເລກທີ 512/ທຫລ (“ທຫລ 512”) ວັນທີ 29 ມິຖຸນາ 2018, ມີຜົນສັກສິດຕັ້ງແຕ່ ວັນທີ 1 ຕຸລາ 2018, ທະນາຄານຈະຕ້ອງຈັດຊັ້ນເງິນໃຫ້ກູ້ ແລະ ເງິນແຮສໍາລັບໜີ້ສູນ. ດັ່ງນັ້ນ, ເງິນໃຫ້ກູ້ຈະແບ່ງອອກເປັນເງິນໃຫ້ກູ້ທີ່ເກີດດອກອອກຜົນ ຫຼື ເງິນກູ້ຄວນເອົາໃຈໃສ່ ຫຼື ເງິນກູ້ທີ່ບໍ່ເກີດດອກອອກຜົນ. ຂຶ້ນຢູ່ກັບສະຖານະທີ່ຄ້າງຊໍາລະເງິນ ແລະ ປັດໃຈອື່ນໆ ຊັ້ນເງິນໃຫ້ກູ້ ໜີ້ປົກກະຕິ (ກຸ່ມ A), ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ຈະຖືວ່າເປັນເງິນໃຫ້ກູ້ທີ່ຄວນເອົາໃຈໃສ່ ແລະ ຊັ້ນເງິນໃຫ້ກູ້ໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສຈະສູນ (ກຸ່ມ D), ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະຖືວ່າເປັນເງິນໃຫ້ກູ້ ທີ່ບໍ່ເກີດດອກອອກຜົນ.

ອີງຕາມລະບຽບການ 512/ທຫລ, ທະນາຄານຕ້ອງທົບທວນ ແລະ ຫັກເງິນແຮລວມໃນແຕ່ລະເດືອນໃຫ້ຖືກຕ້ອງ ແລະ ຄົບຖ້ວນໃນອັດຕາສ່ວນ 0,5% ຂອງຍອດເຫຼືອເງິນໃຫ້ກູ້ທີ່ເປັນຊັ້ນປົກກະຕິ ໃນມື້ທີ່ລາຍງານ. ເຊັ່ນດຽວກັນນັ້ນ, ເງິນແຮສະເພາະສໍາລັບເງິນໃຫ້ກູ້ຊັ້ນຄວນເອົາໃຈໃສ່, ຊັ້ນຕໍ່າກວ່າມາດຕະຖານ, ຊັ້ນສົງໄສ ແລະ ຊັ້ນສູນ ແມ່ນໃຫ້ເອົາຍອດເຫຼືອໜີ້ ທີ່ເປັນເງິນໃຫ້ກູ້ຢືມຂອງເງິນໃຫ້ກູ້ຢືມແຕ່ລະຊັ້ນລົບໃຫ້ມູນຄ່າຂອງຫຼັກຊັບຄໍ້າປະກັນ (ຖ້າມີ) ໂດຍອີງຕາມລະບຽບຂອງ ທຫລ ທີ່ກໍານົດອັດຕາສ່ວນຂອງເງິນແຮຕາມອັດຕາທີ່ກໍານົດໄວ້ດັ່ງລຸ່ມນີ້:

| **ການຈັດຊັ້ນໜີ້** | **ຈຳນວນມື້ເກີນກຳນົດຈ່າຍ** | **ອັດຕາການຫັກເງິນແຮ** |
|---|---|---|
| ໜີ້ປົກກະຕິ (A) | 0 – 29 ວັນ | 0,5% |
| ໜີ້ຄວນເອົາໃຈໃສ່ (B) | 30 – 89 ວັນ | 3% |
| ໜີ້ຕ່ຳກວ່າມາດຕະຖານ (C) | 90 – 179 ວັນ | 20% |
| ໜີ້ສົງໄສ (D) | 180 – 359 ວັນ | 50% |
| ໜີ້ສູນ (E) | ຫຼາຍກວ່າ 360 ວັນ | 100% |

ອັດຕາສ່ວນສິດທິປະໂຫຍດສູງສຸດຂອງຫຼັກຊັບຄ້ຳປະກັນທີ່ໄດ້ຮັບອະນຸຍາດ ພາຍໃຕ້ ທຫລ 512, ມີດັ່ງນີ້:

| **ປະເພດຂອງຫຼັກຊັບຄ້ຳປະກັນ** | **ອັດຕາສ່ວນສູງສຸດທີ່ອະນຸຍາດ** |
|---|---|
| (ກ) ເງິນຝາກກັບທະນາຄານ | |
| - ເປັນສະກຸນເງິນດຽວກັບເງິນກູ້ | 100% |
| - ບໍ່ເປັນສະກຸນເງິນດຽວກັບເງິນກູ້ | 95% |
| (ຂ) ຄຳທີ່ຮັກສາຢູ່ໃນທະນາຄານ | 90% |
| (ຄ) ພັນທະບັດລັດຖະບານ ແລະ ພັນທະບັດ ທຫລ | |
| - ໃນສະກຸນດຽວກັບເງິນກູ້ | |
| ▪ ຖ້າມີອາຍຸຄົງເຫຼືອ ຕ່ຳກວ່າ 1 ປີ | 100% |
| ▪ ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ | 90% |
| ▪ ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ | 80% |
| - ໃນສະກຸນເງິນທີ່ແຕກຕ່າງກັບເງິນກູ້ | |
| ▪ ຖ້າມີອາຍຸຄົງເຫຼືອ ຕ່ຳກວ່າ 1 ປີ | 95% |
| ▪ ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ | 85% |
| ▪ ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ | 75% |
| (ງ) ເງິນຝາກກັບທະນາຄານອື່ນ ຫຼື ສະຖາບັນການເງິນອື່ນ | |
| ▪ ຖ້າມີອາຍຸຄົງເຫຼືອ ຕ່ຳກວ່າ 1 ປີ | 80% |
| ▪ ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ | 75% |
| ▪ ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ | 70% |
| (ຈ) ໜັງສືສິນເຊື່ອ (LC) ຫຼື ໜັງສືສິນເຊື່ອແບບສຳຮອງ (SBLC) | 95% |
| (ສ) ໜັງສືຄ້ຳປະກັນ (LG) ຫຼື Bank Guarantee (BG) | 90% |
| (ຊ) ອະສັງຫາລິມະຊັບ | 40% |

ໃນການປ່ຽນແປງຂອງເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ ແມ່ນຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ "ລາຍຈ່າຍເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ". ຄັງເງິນແຮສະສົມສະເພາະສຳລັບ ເງິນກູ້ທີ່ບໍ່ເກີດດອກອອກຜົນ ແມ່ນຖືກບັນທຶກຢູ່ໃນໃບລາຍງານຖານະການເງິນ "ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ,ສຸດທິເງິນແຮສະເພາະ ສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ".

### (ຈ) ການລ້າງໜີ້ສູນ

ເພື່ອໃຫ້ສອດຄ່ອງກັບ ທທລ 512, ເງິນກູ້ຖືກລ້າງອອກ ຢ່າງຊ້າບໍ່ເກີນ 90 ວັນ ນັບຈາກມື້ຈັດຊັ້ນໜີ້ເປັນໜີ້ສູນ.

ເງິນໃຫ້ກູ້ທີ່ຖືກລ້າງອອກ ແມ່ນໃຫ້ບັນທຶກຢູ່ນອກໃບສະຫຼຸບຊັບສິນບັດເພື່ອຕິດຕາມ ແລະ ລວບລວມ. ຈຳນວນເງິນທີ່ເກັບໄດ້ຈາກເງິນໃຫ້ກູ້ທີ່ລ້າງອອກກ່ອນໜ້ານີ້ ແລະ ລວມທັງລາຍໄດ້ຈາກການຂາຍຫຼັກຊັບຄ້ຳປະກັນຂອງເງິນໃຫ້ກູ້ເຫຼົ່ານັ້ນຈະຕ້ອງຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານເມື່ອມີການຮັບເກີດຂຶ້ນ.

### (ສ) ການຫັກເງິນແຮ ສຳລັບພາລະຜູກພັນ ນອກໃບສະຫຼຸບຊັບສິນບັດ

ອີງຕາມລະບຽບການ ທທລ 512, ສາຂາບໍ່ຈຳເປັນຕ້ອງຫັກເງິນແຮສຳລັບພາລະຜູກພັນນອກໃບສະຫຼຸບຊັບສິນບັດຂອງທະນາຄານ, ເວັ້ນເສຍແຕ່ສາຂາວ່າໄດ້ຫັກເງິນແຮພາລະຜູກພັນໄວ້ຢູ່ພາຍໃຕ້ສັນຍາຮັບປະກັນແທນລູກຄ້າຂອງຕົນ, ໃນກໍລະນີທີ່ການຈ່າຍຊຳລະເງິນນັ້ນຖືກຈັດປະເພດໜີ້ ແລະ ເງິນແຮສຳລັບໜີ້ສູນ ແມ່ນຈະຕ້ອງໄດ້ປະຕິບັດຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໄວ້ໃນ ບົດອະທິບາຍ 3(ງ).

### (ຊ) ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ

ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ ແມ່ນຖືກບັນທຶກຕາມມູນຄ່າຕົວຈິງ.

### (ຍ) ຄັງສຳຮອງຕາມລະບຽບການ

ອີງຕາມກົດໝາຍວ່າດ້ວຍ ທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ບັນດາທະນາຄານທຸລະກິດ ແມ່ນຮຽກຮ້ອງໃຫ້ມີຄັງສຳຮອງກຳໄລສຸດທິ ດັ່ງນີ້:

- ກອງທຶນຄັງສຳຮອງຕາມລະບຽບການ
- ກອງທຶນເພື່ອຂະຫຍາຍທຸລະກິດ ແລະ ອື່ນໆ

ອີງຕາມກົດໝາຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ນຍ, ລົງວັນທີ 26 ທັນວາ 2013, ສາຂາຕ້ອງໄດ້ຮັກສາຄັງແຮສຳຮອງຕາມລະບຽບການໃນອັດຕາ 10% ຂອງກຳໄລພາຍຫຼັງທີ່ໄດ້ຫັກເງິນຂາດທຶນສະສົມ. ສາຂາສາມາດຢຸດການຫັກເງິນແຮສຳຮອງເມື່ອຄັງສຳຮອງຕາມລະບຽບການສະສົມເຖິງ 50 ເປີເຊັນຂອງທຶນຈົດທະບຽນ.

### (ດ) ຊັບສິນບັດຄົງທີ່ມີຕົວຕົນ

(i) ລາຍການຊັບສິນບັດຄົງທີ່ມີຕົວຕົນ ແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າສະສົມ (ຖ້າມີ). ຖ້າຫາກລາຍການຂອງຊັບສິນບັດຄົງທີ່ມີຕົວຕົນມີຫຼາຍຊິ້ນສ່ວນທີ່ມີອາຍຸການໃຊ້ງານຕ່າງກັນ ແມ່ນໃຫ້ແຍກແຕ່ລະລາຍການຂອງຊັບສິນບັດຄົງທີ່ມີຕົວຕົນ.

(ii) ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງ ເລກທີ 70/ນຍ ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ແຕ່ວັນທີ 24 ພຶດສະພາ 2016 ເຊິ່ງກຳນົດໂດຍປະທານສະພາແຫ່ງຊາດ, ຄ່າຫຼຸ້ຍຫ້ຽນຂອງຊັບສົມບັດຄົງທີ່ແມ່ນບັນທຶກໃນໃບລາຍງານຜົນການດຳເນີນງານໂດຍນຳໃຊ້ການຄິດໄລ່ແບບສະເໝີຕົວຕາມອາຍຸການໃຊ້ງານຂອງຊັບສົມບັດນັ້ນໆ ໃນອັດຕາເປີເຊັນຕໍ່ປີດັ່ງລຸ່ມນີ້:

| | |
|---|---|
| ສ່ວນປັບປຸງສິດທີ່ໃຫ້ເຊົ່າ | 5% |
| ອຸປະກອນໄຟຟ້າ | 20% |
| ເຄື່ອງເຟີນີເຈີ, ເຄື່ອງຕິດຕັ້ງ ແລະ ເຄື່ອງໃຊ້ຫ້ອງການ | 20% |
| ຍານພາຫະນະ | 20% |

(iii) ລາຍຈ່າຍພາຍຫຼັງທີ່ກ່ຽວຂ້ອງກັບລາຍການຊັບສົມບັດຄົງທີ່ຮັບຮູ້ແລ້ວ ຈະຖືກຮັບຮູ້ເປັນຊັບສິນໄດ້ກໍ່ເມື່ອ ເຫັນວ່າສາມາດເກີດປະໂຫຍດທາງເສດຖະກິດໃນອະນາຄົດ, ສາມາດເພີ່ມປະສິດທິພາບຂອງຊັບສິນເດີມຂອງສາຂາ. ສ່ວນຄ່າໃຊ້ຈ່າຍອື່ນໆ ທີ່ຕາມມາແມ່ນໃຫ້ບັນທຶກເປັນລາຍຈ່າຍໃນໄລຍະທີ່ເກີດຂຶ້ນ.

(iv) ກຳໄລ ຫຼື ຂາດທຶນທີ່ເກີດຈາກການໝົດອາຍຸ ຫຼື ສະສາງ ບັນດາຊັບສົມບັດຄົງທີ່ອອກ ແມ່ນບັນທຶກສ່ວນແຕກຕ່າງລະຫວ່າງລາຄາຄາດຄະເນສຸດທິ ທີ່ສະສາງອອກກັບມູນຄ່າຍັງເຫຼືອຂອງຊັບສິນນັ້ນ ແລະ ສ່ວນແຕກຕ່າງ ດັ່ງກ່າວແມ່ນໄດ້ບັນທຶກລົງໃນໃບລາຍງານຜົນການດຳເນີນງານຕາມວັນທີທີ່ຊັບສົມບັດ ດັ່ງກ່າວໝົດອາຍຸ ຫຼື ຖືກສະສາງອອກ.

(v) ຄ່າຫຼຸ້ຍຫ້ຽນຂອງຊັບສົມບັດຄົງທີ່ທີ່ຫັກຄົບຕາມກຳນົດແລ້ວແມ່ນໄດ້ນຳສະເໜີຢູ່ໃນໃບລາຍງານຖານະການເງິນຈົນກວ່າມີການຊຳລະສະສາງ ແລະ ລ້າງອອກຈາກບັນຊີ.

## (ຓ) ການຮັບຮູ້ລາຍຮັບ

ລາຍຮັບດອກເບ້ຍແມ່ນຮັບຮູ້ຕາມຫຼັກການຄ້າງຮັບຄ້າງຈ່າຍປະຈຳວັນ, ຍົກເວັ້ນກໍລະນີທີ່ບັນຊີດັ່ງກ່າວໄດ້ກາຍເປັນບັນຊີທີ່ບໍ່ເກີດດອກອອກຜົນ. ເມື່ອບັນຊີດັ່ງກ່າວກາຍມາເປັນບັນຊີທີ່ບໍ່ເກີດດອກອອກຜົນ, ການບັນທຶກລາຍຮັບດອກເບ້ຍມາເປັນລາຍຮັບພັກໄວ້ຈົນກວ່າຈະເກີດມີການຮັບຮູ້ເງິນສົດ. ບັນຊີຂອງລູກຄ້າທີ່ຖືກພິຈາລະນາເປັນບັນຊີທີ່ບໍ່ເກີດດອກອອກຜົນເມື່ອບໍ່ມີການຊຳລະເງິນຕົ້ນເກີນກຳນົດ 90 ວັນ, ອີງຕາມກົດລະບຽບຂອງ ທຫລ.

ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການທາງການເງິນ ແມ່ນລວມມີຄ່າທຳນຽມທີ່ໄດ້ຮັບຈາກການເຄື່ອນໄຫວເງິນໂອນຕ່າງໆ, ການຊຳລະສະສາງທາງການຄ້າ, ການແລກປ່ຽນເງິນຕາຕ່າງປະເທດ, ລາຍການເຄື່ອນໄຫວຕູ້ກົດເງິນສົດ ແລະ ໜັງສືຮັບຮອງທາງການເງິນ. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບຕາມຫຼັກການເງິນສົດ.

ລາຍຮັບຈາກການໃຫ້ບໍລິການຕ່າງໆຂອງສາຂາແມ່ນໄດ້ຕັ້ງຄ້າງຮັບຕາມມາດຕະຖານດັ່ງລຸ່ມນີ້:

(i) ຄ່າທຳນຽມ ແລະ ຄ່າບໍລິການ ໃນການຈັດສິນເຊື່ອພ້ອມທັງສິ່ງອຳນວຍຄວາມສະດວກອື່ນໆ ທີ່ໃຫ້ບໍລິການແກ່ລູກຄ້າແມ່ນຮັບຮູ້ເມື່ອມີການເຄື່ອນໄຫວດັ່ງກ່າວ;

(ii) ຄ່າທຳນຽມຂໍ້ຜູກມັດ ແລະ ຄ່າຮັບປະກັນ ພ້ອມກັບສິ່ງອຳນວຍຄວາມສະດວກອື່ນໆ ທີ່ໃຫ້ບໍລິການແກ່ລູກຄ້າແມ່ນ ຮັບຮູ້ເມື່ອມີການເຄື່ອນໄຫວດັ່ງກ່າວ; ແລະ

(iii) ຄ່າບໍລິການ ແລະ ຄ່າຈັດການ ແມ່ນໄດ້ຮັບຮູ້ ເມື່ອການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

### (ຖ) ລາຍຈ່າຍດອກເບ້ຍ

ລາຍຈ່າຍດອກເບ້ຍຂອງເງິນຝາກແມ່ນໄດ້ຮັບຮູ້ຕາມຫຼັກການຄ້າງຮັບຄ້າງຈ່າຍປະຈຳວັນ.

### (ທ) ອາກອນກຳໄລ

ລາຍຈ່າຍອາກອນປະກອບດ້ວຍ ອາກອນໃນປີ ແລະ ອາກອນເຍື້ອນຊຳລະ. ອາກອນໃນປີ ແລະ ອາກອນເຍື້ອນຊຳລະ ແມ່ນຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

**ອາກອນພາຍໃນປີ**

ອາກອນພາຍໃນປີ ແມ່ນຄິດໄລ່ຕາມກົດໝາຍອາກອນ ຫຼື ຕາມບັນຍັດ ໃນວັນທີທີ່ປະກົດໃນໃບລາຍງານຖານະການເງິນ. ຜູ້ບໍລິຫານໄດ້ຕີລາຄາສະຖານະການທີ່ກົດໝາຍອາກອນໃນປັດຈຸບັນ ອາດມີການຕີຄວາມໝາຍທີ່ແຕກ ຕ່າງກັນເປັນແຕ່ລະໄລຍະ, ທັງໄດ້ມີການກະກຽມເງິນແຮໄວ້ ໃນກໍລະນີທີ່ເກີດມີຈຳນວນເງິນທີ່ຕ້ອງຈ່າຍເພີ່ມເຕີມ ໃຫ້ແກ່ກົມສ່ວຍສາອາກອນ.

ເງິນແຮ ສຳລັບອາກອນ ໃນປັດຈຸບັນ ແມ່ນຄິດໄລ່ຈາກລາຍຮັບທັງໝົດ ໂດຍອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ສຳລັບກຳໄລໃນປີ 2021, ທະນາຄານຈະຕ້ອງຈ່າຍອາກອນກຳໄລໃນອັດຕາ 20% ຂອງກຳໄລທາງອາກອນທັງໝົດ.

**ອາກອນເຍື້ອນຊຳລະ**

ອາກອນເຍື້ອນຊຳລະຖືກຮັບຮູ້ໂດຍສ່ວນຕ່າງຊົ່ວຄາວລະຫວ່າງ ຍອດຍົກມາຂອງຊັບສິນ ແລະ ໜີ້ສິນ ສຳລັບຈຸດປະສົງການລາຍງານທາງການເງິນ ແລະ ຈຳນວນເງິນທີ່ຖືກໃຊ້ສຳລັບການໄລ່ອາກອນ, ການວັດແທກມູນຄ່າອາກອນເຍື້ອນຊຳລະ ສະທ້ອນໃຫ້ເຫັນຜົນກະທົບທາງດ້ານອາກອນ ທີ່ຈະເປັນໄປຕາມຮູບແບບ ທີ່ສາຂາຄາດຫວັງ ໃນວັນທີລາຍງານ, ເພື່ອກູ້ຄືນ, ຫຼື ຊຳລະໜີ້ສິນ ທີ່ຍັງເຫຼືອຂອງຊັບສິນ ແລະ ໜີ້ສິນ,

ອາກອນເຍື້ອນຊຳລະ ແມ່ນຖືກວັດແທກຕາມອັດຕາອາກອນທີ່ຄາດວ່າຈະຖືກນຳໃຊ້ກັບ ຄວາມແຕກຕ່າງເມື່ອເກີດມີການໄດ້ກັບຄືນ, ໂດຍໃຊ້ອັດຕາອາກອນ ຫຼື ມີຜົນປະກາດໃຊ້ໃນມື້ທີ່ມີການລາຍງານ,
ຊັບສິນ ແລະ ໜີ້ສິນ ອາກອນເຍື້ອນຊຳລະ ຖືກລົບລ້າງກັນກໍ່ຕໍ່ເມື່ອມີສິດຜົນບັງຄັບໃຊ້ທາງກົດໝາຍ ເພື່ອລົບລ້າງໜີ້ສິນ ແລະ ຊັບສິນພາຍໃນປີ ເຊິ່ງກ່ຽວພັນການເກັບພາສີຂອງເຈົ້າໜ້າທີ່ສ່ວຍສາອາກອນ ໃນສ່ວນທີ່ມີຈິງ ຫຼື ສ່ວນທີ່ແຕກຕ່າງ ຂອງການເສຍອາກອນເຊັ່ນດຽວກັນ. ແຕ່ວ່າພວກເຂົາໄດ້ຕັ້ງໃຈຊຳລະໜີ້ສິນ ແລະ ຊັບສິນພາຍໃນປີ ຕາມພື້ນຖານລາຍໄດ້ທີ່ຫັກພາສີ ຫຼື ຊັບສິນ ແລະ ໜີ້ສິນ ຂອງພວກເຂົາຈະຖືກຮັບຮູ້ພ້ອມໆກັນ.

ຊັບສິນອາກອນເຍື້ອນຊຳລະໃຊ້ສຳລັບບັນດາອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນ, ຍອດຍົກໄປຂອງອາກອນທີ່ຈ່າຍເກີນ ແລະ ລາຍຈ່າຍທີ່ຖືກຍົກເວັ້ນອາກອນ, ໝາຍຄວາມວ່າອາກອນກຳໄລຈະຖືກຄິດໄລ່ ໂດຍຫັກບັນດາອາກອນທີ່ບໍ່ໄດ້ຈ່າຍຍ້ອນຂາດທຶນ. ຍອດຍົກໄປຂອງອາກອນ ແລະ ລ່າຍຈ່າຍທີ່ຖືກຍົກເວັ້ນອາກອນໃນອະນາ ຄົດທີ່ສາມາດຍອມຮັບໄດ້. ຊັບສິນອາກອນເຍື້ອນຊຳລະ ພິຈາລະນາໃນແຕ່ລະມື້ທີ່ມີການລາຍງານ ແລະ ຖືກລົບລ້າງອອກ ໃນອາກອນກຳໄລທີ່ກ່ຽວຂ້ອງກັບຜົນປະໂຫຍດຂອງອາກອນລາຍໄດ້ ຢ່າງແທ້ຈິງ.

## (ນ) ເງິນແຮ

ເງິນແຮ ຈະຖືກຮັບຮູ້, ຖ້າເປັນຜົນຂອງການດຳເນີນງານທີ່ຜ່ານມາ, ສາຂາມີພັນທະຕາມກົດໝາຍ ຫຼື ໜີ້ສິນ ທີ່ອາດຈະເກີດຂຶ້ນໃນປະຈຸບັນ ຊຶ່ງສາມາດປະເມີນໄດ້ຢ່າງໜ້າເຊື່ອຖື ແລະ ມີຄວາມເປັນໄປໄດ້ຂ້ອນຂ້າງແນ່ນອນ ທີ່ສາຂາຈະຕ້ອງໄດ້ຈ່າຍຜົນຕອບແທນທີ່ເປັນເງິນເພື່ອຊຳລະໜີ້ສິນ ດັ່ງກ່າວ. ເງິນແຮພິຈາລະນາຈາກສ່ວນຫຼຸດກະແສເງິນສົດໃນອະນາຄົດໂດຍໃຊ້ອັດຕາຄິດໄລ່ກ່ອນຫັກອາກອນ ຊຶ່ງສະທ້ອນການປະເມີນຄວາມສ່ຽງ ຂອງຕະຫຼາດໃນປະຈຸບັນຂອງມູນຄ່າຕາມເວລາຂອງເງິນ ແລະຄວາມສ່ຽງສະເພາະທີ່ກ່ຽວຂ້ອງກັບໜີ້ສິນ.

## (ບ) ພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ກ່ຽວຂ້ອງ ແມ່ນຖືກພິຈາລະນາວ່າກ່ຽວຂ້ອງກັບທະນາຄານເມື່ອພາກສ່ວນ ດັ່ງກ່າວ ທີ່ມີຄວາມສາມາດຄວບຄຸມທາງກົງ ຫຼື ທາງອ້ອມ ທີ່ພົ້ນເດັ່ນຕໍ່ກັບພາກສ່ວນອື່ນທີ່ກ່ຽວຂ້ອງກັນກັບການຕັດສິນໃຈກ່ຽວກັບການເງິນ ແລະ ການດຳເນີນງານ ຫຼື ທະນາຄານພ້ອມກັບພາກສ່ວນດັ່ງກ່າວ ມີການຄວບຄຸມຮ່ວມກັນ ຫຼື ມີອຳນາດທີ່ພົ້ນເດັ່ນ, ພາກສ່ວນທີ່ກ່ຽວຂ້ອງອາດເປັນບຸກຄົນ ຫຼື ບໍລິສັດ ແລະ ລວມທັງສະມາຊິກ ຄອບຄົວຂອງບຸກຄົນໃດໜຶ່ງທີ່ຖືວ່າເປັນພາກສ່ວນທີ່ກ່ຽວຂ້ອງ.

## (ປ) ສິດທິຜົນປະໂຫຍດຂອງພະນັກງານ

*ຜົນປະໂຫຍດພາຍຫຼັງອອກການ*

ຜົນປະໂຫຍດພາຍຫຼັງອອກການ ແມ່ນຈະຖືກຈ່າຍໃຫ້ກັບພະນັກງານຂອງສາຂາທີ່ກະສຽນໂດຍຫ້ອງການ ກອງທຶນປະກັນສັງຄົມແຫ່ງຊາດ (ຫກປຊ) ເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ປະກອບສ່ວນ ໃນການໃຫ້ສິດທິຜົນປະໂຫຍດພາຍຫຼັງອອກການ ໂດຍການຈ່າຍເບ້ຍປະກັນສັງຄົມເປັນເດືອນ ໃນອັດຕາ 6,00% ຂອງເງິນເດືອນ (ເພດານສູງສຸດຂອງ ຫກປຊ ແມ່ນ 4.500.000 ກີບ, ອັດຕາສູງສຸດໃໝ່ມີຜົນຕັ້ງແຕ່ວັນທີ 01 ມັງກອນ 2017). ສາຂາ ບໍ່ມີພັນທະເພີ່ມເຕີມຕໍ່ກັບການໃຫ້ຜົນປະໂຫຍດພະນັກງານພາຍຫຼັງອອກການ ນອກຈາກນີ້.

*ຜົນປະໂຫຍດຈາກການເລີກຈ້າງ*

ອີງຕາມມາດຕາທີ 82 ຂອງກົດໝາຍວ່າດ້ວຍ ແຮງງານ ສະບັບປັບປຸງທີ່ອອກວັນທີ 24 ທັນວາ 2013 ໂດຍປະທານປະເທດຂອງ ສປປລາວ. ສາຂາມີພັນທະທີ່ຕ້ອງຈ່າຍເງິນອຸດໜູນໃຫ້ພະນັກງານທີ່ຖືກຍົກເລີກສັນຍາແຮງງານ ໃນກໍລະນີດັ່ງຕໍ່ໄປນີ້:

- ພະນັກງານທີ່ຂາດຄວາມຊຳນິຊຳນານພິເສດ ຫຼື ສຸຂະພາບບໍ່ແຂງແຮງ ແລະ ຫຼັງຈາກຊ່ວຍຊັບຊ້ອນໃຫ້ປະຕິບັດງານ ໃນການດຳເນີນງານທີ່ເໝາະສົມອື່ນໆ ເພີ່ມເຕີມຕາມຄວາມສາມາດ ແລະ ສຸຂະພາບ ແລະ ບຸກຄົນ ດັ່ງກ່າວຍັງມີບັນຫາ ຄືຍັງບໍ່ສາມາດເຮັດວຽກຕໍ່ໄດ້;
- ນາຍຈ້າງພິຈາລະນາເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງຫຼຸດຈຳນວນພະນັກງານເພື່ອປັບປຸງການເຮັດວຽກໃນຫົວໜ່ວຍແຮງງານຫຼັງຈາກປຶກສາສະພາບການຄ້າ ຫຼື ຕົວແທນພະນັກງານ ຫຼື ພະນັກງານສ່ວນໃຫຍ່ ແລະ ໄດ້ລາຍງານ ໄປຍັງໜ່ວຍງານບໍລິຫານ.

ສຳລັບການຍົກເລີກສັນຍາແຮງງານຕາມເງື່ອນໄຂທີ່ກ່າວມາຂ້າງເທິງ, ນາຍຈ້າງຕ້ອງຈ່າຍເງິນຊົດເຊີຍໃຫ້ຜູ້ອອກແຮງງານທີ່ຢຸດເຊົາວຽກເຊິ່ງຄິດໄລ່ໃນເກນ 10% ຂອງເງິນເດືອນພື້ນຖານກ່ອນການຢຸດເຊົາວຽກຄູນດ້ວຍຈຳນວນຂອງເດືອນທີ່ໄດ້ເຮັດວຽກ.

## (ຜ) ສັນຍາເຊົ່າ

ທະນາຄານກໍ່ຈະມີການປະເມີນຜົນວ່າມີສັນຍາ ຫຼື ສັນຍາເຊົ່າບໍ່, ຫາກສັນຍາຊີ້ແຈ້ງເຖິງສິດໃນການຄວບຄຸມການໃຊ້ຊັບສິນທີ່ລະບຸເປັນໄລຍະເວລາໜຶ່ງເພື່ອແລກປ່ຽນກັບການພິຈາລະນາ.

### (i) ສິດນຳໃຊ້ຊັບສິນຕາມສັນຍາ

ທະນາຄານຮັບຮູ້ສິດໃນການນຳໃຊ້ຊັບສິນ ໃນວັນທີ່ເລີ່ມສັນຍາເຊົ່າ (ວັນທີ່ຊັບສິນພ້ອມໃຊ້ງານ), ສິດໃນການນຳໃຊ້ຊັບສິນແມ່ນຖືກວັດແທກຕາມມູນຄ່າຕົ້ນທຶນເດີມ, ລົບດ້ວຍຄ່າຫຼຸ້ຍຫ້ຽນສະສົມແລະຂາດທຶນຈາກການດ້ອຍຄ່າ ແລະການດັດແກ້ສຳລັບການວັດມູນຄ່າໃໝ່ຂອງໜີ້ສິນຕາມສັນຍາເຊົ່າ. ມູນຄ່າຕົ້ນທຶນຂອງສິດໃນການນຳໃຊ້ຊັບສິນ ລວມມີ ຈຳນວນໜີ້ສິນທີ່ຮັບຮູ້ຕາມສັນຍາເຊົ່າ, ມູນຄ່າຕົ້ນທຶນໂດຍກົງທີ່ເກີດຂຶ້ນ ແລະ ການຊຳລະຄ່າເຊົ່າທີ່ເກີດຂື້ນ ນະ ຫຼື ກ່ອນວັນທີ່ເລີ່ມຕົ້ນຫັກຕາມປັດໃຈສັນຍາເຊົ່າທີ່ໄດ້ຮັບ.

### *(ii)* ໜີ້ສິນຕາມສັນຍາເຊົ່າ

ນະວັນທີ່ເລີ່ມສັນຍາເຊົ່າ ທະນາຄານຈະຮັບຮູ້ໜີ້ສິນຕາມສັນຍາເຊົ່າ ເຊິ່ງວັດແທກດ້ວຍມູນຄ່າປະຈຸບັນ ຂອງຈຳນວນເງິນທີ່ຕ້ອງຊຳລະຕາມສັນຍາເຊົ່າຕະຫຼອດອາຍຸສັນຍາເຊົ່າ. ການຊຳລະຄ່າເຊົ່າທີ່ລວມກັບການຊຳລະຄົງທີ່ (ລວມເຖິງການຳລະເງິນຄົງທີ່ໃນສາລະສຳຄັນ) ຫັກລົບກັບສິ່ງຈູງໃຈຕາມສັນຍາເຊົ່າ, ການຈ່າຍຄ່າຜັນແປຂຶ້ນຢູ່ກັບດັດຊະນີ ຫຼື ອັດຕາ ແລະ ຈຳນວນເງິນທີ່ຄາດວ່າຈະຕ້ອງຈ່າຍພາຍໃຕ້ການຄໍ້າປະກັນມູນຄ່າຄົງເຫຼືອ. ເງິນຈ່າຍຄ່າເຊົ່າທີ່ລວມທັງລາຄາໃຊ້ສິດຂອງຕົວເລືອກການຊື້ຕາມສົມຄວນທີ່ທະນາຄານຈະໃຊ້ ແລະ ການຈ່າຍຄ່າປັບໃໝສຳລັບການຍົກເລືອກສັນຍາເຊົ່າ, ຖ້າຫາກໄລຍະເວລາຂອງສັນຍາເຊົ່າສະທ້ອນໃຫ້ເຫັນວ່າທະນາຄານໃຊ້ສິດໃນການຍົກເລືອກສັນຍາ. ການຈ່າຍຄ່າເຊົ່າແບບຜັນແປທີ່ບໍ່ຂຶ້ນຢູ່ກັບດັດຊະນີ ຫຼື ອັດຕາແມ່ນຈະຮັບຮູ້ເປັນຄ່າໃຊ້ຈ່າຍ (ຍົກເວັ້ນແຕ່ຈະເກີດຂຶ້ນເພື່ອຜະລິດສິນຄ້າໃນສາງ) ໃນຊ່ວງເວລາທີ່ເກີດເຫດການ ຫຼື ເງື່ອນໄຂທີ່ເຮັດໃຫ້ເກີດການຊຳລະເງິນ.

ໃນການຄຳນວນມູນຄ່າປັດຈຸບັນຂອງຄ່າເຊົ່າ, ທະນາຄານໃຊ້ອັດຕາສະເລ່ຍຖ່ວງນໍ້າໜັກຂອງເງິນຝາກປະຈຳໃຫ້ກັບລູກຄ້າເພາະວ່າອັດຕາດອກເບ້ຍບໍ່ສາມາດກຳນົດໃນສັນຍາເຊົ່າໄດ້ທັນທີ. ຫຼັງຈາກວັນທີມີຜົນທະຕໍ່ສັນຍາເຊົ່າ, ຈຳນວນໜີ້ສິນຕາມສັນຍເຊົ່າ ແມ່ນເພີ່ມຂຶ້ນເພື່ອໃຫ້ສອດຄ່ອງກັບການເພີ່ມຂຶ້ນຂອງດອກເບ້ຍ ແລະ ການຫຼຸດລົງສຳລັບຄ່າເຊົ່າທີ່ໄດ້ຈ່າຍໄປ. ນອກຈາກນີ້, ມຸນຄ່າຕາມບັນຊີຂອງໜີ້ສິນສັນຍາເຊົ່າຈະຖືກວັດແທກມຸນຄ່າຖ້າຫາກມີການແກ້ໄຂ, ປ່ຽນແປງໃນການຊຳລະເງິນຕາມສັນຍາເຊົ່າ (ເຊັ່ນ: ການປ່ຽນແປງການຊຳລະເງິນໃນອານາຄົດ ເຊິ່ງເປັນຜົນມາຈາກການປ່ຽນແປງດັດຊະນີ ຫຼື ອັດຕາທີ່ໃຊ້ໃນການກຳນົດດັ່ງກ່າວຄືການຊຳລະເງິນຕາມສັນຍາເຊົ່າ) ຫຼື ການປ່ຽນແປງໃນການປະເມີນສິດໃນການເລືອກຊື້ຊັບສິນທີ່ຕິດພັນ.

## 4. ເງິນສົດ

| | 2021 | 2020 |
|---|---|---|
| | *(ລ້ານກີບ)* | *(ລ້ານກີບ)* |
| ລາວກີບ ("LAK") | 3.822 | 2.633 |
| ໂດລາສະຫາລັດ ("USD") | 4.964 | 1.291 |
| ໄທບາດ ("THB") | 845 | 810 |
| ອື່ນໆ | 434 | 342 |
| | **10.065** | **5.076** |

## 5. ເງິນຝາກຢູ່ສຳນັກງານໃຫຍ່ ແລະ ສາຂາອື່ນ ແລະ ທະນາຄານອື່ນໆ

| | 2021 | 2020 |
|---|---|---|
| | *(ລ້ານກີບ)* | *(ລ້ານກີບ)* |
| ລາວກີບ ("LAK") | 63.004 | 147.304 |
| ສະກຸນເງິນອື່ນໆ | 218.218 | 352.959 |
| | **281.222** | **500.263** |

### ກ. ລາຍການພາຍໃນປະເທດ

| | 2021 | 2020 |
|---|---|---|
| | *(ລ້ານກີບ)* | *(ລ້ານກີບ)* |
| ຕາມເວລາຮຽກເກັບ | 152.041 | 225.949 |
| ເງິນຝາກມີກຳນົດ | - | - |
| | **152.041** | **225.949** |

### ຂ. ລາຍການຕ່າງປະເທດ

| | 2021 | 2020 |
|---|---|---|
| | *(ລ້ານກີບ)* | *(ລ້ານກີບ)* |
| **ຕາມເວລາຮຽກເກັບ** | | |
| ໂດລາສະຫະລັດ | 101.769 | 167.941 |
| ໄທບາດ | 24.398 | 8.544 |
| ອື່ນໆ | 3.014 | 5.305 |
| | 129,181 | **181.790** |

**ດ. ເງິນຝາກມີກຳນົດ**

| | 2021<br>*(ລ້ານກີບ)* | 2020<br>*(ລ້ານກີບ)* |
|---|---|---|
| **ຕາມເວລາຮຽກເກັບ** | | |
| ໂດລາສະຫະລັດ | - | 92.524 |
| | **-** | **92.524** |

ເງິນຝາກກະແສລາຍວັນ ຢູ່ທະນາຄານພາຍໃນ ແລະ ຕ່າງປະເທດ ແມ່ນເປັນເງິນທີ່ບໍ່ມີດອກເບ້ຍ.

## 6. ເງິນຝາກຕາມລະບຽບການກັບທະນາຄານກາງ.

| | 2021<br>*(ລ້ານກີບ)* | 2020<br>*(ລ້ານກີບ)* |
|---|---|---|
| ເງິນຝາກຕາມລະບຽບການ: | | |
| ເງິນຝາກບັງຄັບ | 44.259 | 57.983 |
| ເງິນຝາກກະແສລາຍວັນ | 43.120 | 27.479 |
| | **87.379** | **85.462** |

ຍອດເຫຼືອກັບ ທຫລ ລວມມີ ເງິນຝາກບັງຄັບ ແລະ ເງິນຝາກກະແສລາຍວັນ. ເງິນຝາກເຫຼົ່ານີ້ ແມ່ນບໍ່ມີດອກເບ້ຍ.

ພາຍໃຕ້ກົດລະບຽບຂອງ ທຫລ, ສາຂາແມ່ນໄດ້ຖືກຮຽກຮ້ອງໃຫ້ມີການຮັກສາເງິນສົດໄວ້ກັບທຫລໃນຮູບແບບຂອງບັນຊີເງິນຝາກແຮບັງຄັບ, ຊຶ່ງຄິດໄລ່ ໃນອັດຕາ 3% ສຳລັບເງິນກີບ ແລະ 5% ( 2020: 4% ແລະ 8%) ໃນທຸກໆສອງຄັ້ງຕໍ່ເດືອນ ຂອງເງິນຝາກທັງໝົດຂອງລູກຄ້າທີ່ມີກຳນົດໄລຍະເວລາໜ້ອຍກວ່າ 12 ເດືອນ, ໃນສະກຸນເງິນກີບ ແລະ ເງິນຕາຕ່າງປະເທດຕາມລຳດັບ. ໃນລະຫວ່າງປີ, ທາງສາຂາໄດ້ຮັກສາເງິນຝາກບັງຄັບຕາມລະບຽບການເພື່ອໃຫ້ສອດຄ່ອງກັບຂໍ້ກຳນົດຂອງ ທຫລ.

ອັດຕາສ່ວນສຳຮອງໄດ້ຖືກປັບປຸງໂດຍທະນາຄານແຫ່ງ ສປປລາວ ໂດຍຜ່ານຈົດໝາຍ 272/ທຫລ, ລົງວັນທີ 26 ພຶດສະພາ 2021

## 7. ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ໃຫ້ແກ່ລູກຄ້າ, ສຸດທິເງິນແຮສະເພາະ.

| | 2021<br>LAK<br>*(in millions)* | 2020<br>LAK<br>*(in millions)* |
|---|---|---|
| ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ: | | |
| ເງິນເບີກເກີນບັນຊີ | 19.733 | 12.566 |
| ເງິນໃຫ້ກູ້ຢືມ | 625.644 | 512.920 |
| | **645.377** | **525.486** |
| ເງິນແຮສຳລັບໜີ້ເສຍ ແລະ ໜີ້ສົງໄສ | | |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ | - | - |
| ເງິນແຮສະເພາະ | **645.377** | **525.486** |

### ກ. ຈັດປະເພດຕາມອາຍຸຂອງສິນເຊື່ອທີ່ຍັງເຫຼືອ

| | 2021<br>*(ລ້ານກີບ)* | 2020<br>*(ລ້ານກີບ)* |
|---|---|---|
| ພາຍໃນ 1 ປີ | 474.307 | 401.119 |
| ເກີນ 1 ປີ | 171.070 | 124.367 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | - | - |
| | **645.377** | **525.486** |

### ຂ. ຈັດປະເພດຕາມສະກຸນເງິນ

| | 2021<br>*(ລ້ານກີບ)* | 2020<br>*(ລ້ານກີບ)* |
|---|---|---|
| ກີບ | 412.059 | 354.387 |
| ໂດລາສະຫະລັດ | 233.318 | 171.099 |
| | **645.377** | **525.486** |

### ຄ. ແຍກຕາມປະເພດທຸລະກິດ

| | 2021 (ລ້ານກີບ) | 2020 (ລ້ານກີບ) |
|---|---|---|
| ກະສິກຳ - ປ່າໄມ້ | 19.962 | 6.626 |
| ການຄ້າ | 32.856 | 124.291 |
| ອຸດສະຫະກຳ | 12.407 | 12.178 |
| ການບໍລິການ | 519.894 | 327.317 |
| ຂົນສົ່ງ - ໄປສະນີ | 60.258 | 55.074 |
| | **645.377** | **525.486** |

### ງ. ຈັດປະເພດຕາມຜົນການດຳເນີນງານ

| | 2021 (ລ້ານກີບ) | 2020 (ລ້ານກີບ) |
|---|---|---|
| ເງິນກູ້ເກີດດອກອອກຜົນ | 645.377 | 525.486 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | - | - |
| | **645.377** | **525.486** |

### ຈ. ຈັດປະເພດຕາມອັດຕາດອກເບ້ຍ (ຕໍ່ປີ)

| | 2021 % | 2020 % |
|---|---|---|
| ເງິນກູ້: | | |
| ກີບ | 4,25%-6,25% | 4,25% - 6,25% |
| ໂດລາ | 1,57%-6,00% | 1,66% - 2,38% |
| ບາດ | N/A | N/A |

**ສ. ເງິນແຮສະເພາະ ສໍາລັບກິດຈະກໍາສິນເຊື່ອ**

| | 2021<br>*(ລ້ານກີບ)* | 2020<br>*(ລ້ານກີບ)* |
|---|---|---|
| ຍອດເຫຼືອຕົ້ນປີ | - | 11.247 |
| ເງິນແຮທີ່ເກີດຂຶ້ນໃນປີ | - | 4.653 |
| ລ້າງໜີ້ສູນພາຍໃນປີ | - | (15.900) |
| **ຍອດເຫຼືອໃນທ້າຍປີ** | **-** | **-** |

**ຊ. ເງິນແຮທົ່ວໄປ ສໍາລັບກິດຈະກໍາສິນເຊື່ອ**

| | 2021<br>*(ລ້ານກີບ)* | 2020<br>*(ລ້ານກີບ)* |
|---|---|---|
| ຍອດເຫຼືອຕົ້ນປີ | 2.579 | 1.869 |
| ສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາ | - | 14 |
| ເງິນແຮທີ່ເກີດຂຶ້ນໃນປີ | 586 | 696 |
| **ຍອດເຫຼືອໃນທ້າຍປີ** | **3.165** | **2.579** |

## 8. ຊັບສິນບັດຄົງທີ່ມີຕົວຕົນ

| | ເອກະສານຊ້ອນທ້າຍ | 2021<br>*(ລ້ານກີບ)* | 2020<br>*(ລ້ານກີບ)* |
|---|---|---|---|
| ຊັບສິນບັດຄົງທີ່ມີຕົວຕົນ | *8.1* | 1.947 | 2.486 |
| **ລວມ** | | **1.947** | **2.486** |

## 8.1 ຊັບສິນບັດຄົງທີ່ມີຕົວຕົນ

| | ສ່ວນປັບປຸງສິດທີ່ໃຫ້ເຊົ່າ (ລ້ານກີບ) | ອຸປະກອນ ຄອມພິວເຕີ້ (ລ້ານກີບ) | ອຸປະກອນຫ້ອງການ (ລ້ານກີບ) | ເຟີນີເຈີ ແລະ ເຄື່ອງຕິດຕັ້ງ (ລ້ານກີບ) | ຍານພາຫະນະ (ລ້ານກີບ) | ລວມ (ລ້ານກີບ) |
|---|---|---|---|---|---|---|
| **ຕົ້ນທຶນ** | | | | | | |
| ຍອດເຫຼືອ ວັນທີ 31 ທັນວາ 2019 | 3.158 | 7.661 | - | 3.194 | 322 | 14.335 |
| ເພີ່ມຂຶ້ນໃນປີ | 140 | 1.467 | - | 13 | - | 1.620 |
| ສະສາງໃນປີ | (1.066) | (1.452) | - | (1.235) | - | (3.753) |
| **ຍອດເຫຼືອໃນວັນທີ 31 ທັນວາ 2020 ແລະ ວັນທີ 1 ມັງກອນ 2021** | **2.232** | **7.676** | **-** | **1.972** | **322** | **12.202** |
| ເພີ່ມຂຶ້ນໃນປີ | - | 257 | - | - | - | 257 |
| ສະສາງໃນປີ | (168) | (3.533) | (61) | (166) | - | (3.928) |
| ການດັດແປງ | 114 | (711) | 411 | 278 | - | 92 |
| **ຍອດເຫຼືອໃນວັນທີ 31 ທັນວາ 2021** | **2.178** | **3.689** | **350** | **2.084** | **322** | **8.623** |
| **ຄ່າຫຼຸ້ຍຫ້ຽນສະສົມ** | | | | | | |
| ຍອດເຫຼືອ ວັນທີ 31 ທັນວາ 2019 | 2.172 | 7.113 | - | 2.682 | 319 | 12.286 |
| ຄ່າຫຼຸ້ຍຫ້ຽນໃນປີ | 244 | 409 | - | 434 | 3 | 1.090 |
| ສະສາງໃນປີ | (1.000) | (1.446) | - | (1.214) | - | (3.660) |
| **ຍອດເຫຼືອໃນວັນທີ 31 ທັນວາ 2020 ແລະ ວັນທີ 1 ມັງກອນ 2021** | **1.416** | **6.076** | **-** | **1.902** | **322** | **9.716** |
| ຄ່າຫຼຸ້ຍຫ້ຽນໃນປີ | 161 | 461 | 37 | 101 | - | 760 |
| ຄ່າຫຼຸ້ຍຫ້ຽນໃນປີ | (145) | (3.491) | (61) | (157) | - | (3.854) |
| ການດັດແປງ | 99 | (605) | 344 | 216 | - | 54 |
| **ຍອດເຫຼືອໃນວັນທີ 31 ທັນວາ 2021** | **1.531** | **2.441** | **320** | **2.062** | **322** | **6.676** |
| **ມູນຄ່າທາງບັນຊີ** | | | | | | |
| **ຍອດເຫຼືອໃນວັນທີ 31 ທັນວາ 2019** | **986** | **548** | **-** | **512** | **3** | **2.049** |
| **ຍອດເຫຼືອໃນວັນທີ 31 ທັນວາ 2020 ແລະ ວັນທີ 1 ມັງກອນ 2021** | **816** | **1.600** | **-** | **70** | **-** | **2.486** |
| **ຍອດເຫຼືອໃນວັນທີ 31 ທັນວາ 2021** | **647** | **1.248** | **30** | **22** | **-** | **1.947** |

## 9. ສິດໃນການນຳໃຊ້ຊັບສິນ

| | 2021 | 2020 |
|---|---|---|
| | *(ລ້ານກີບ)* | *(ລ້ານກີບ)* |
| **ຍອດເຫຼືອໃນວັນທີ 31 ມັງກອນ** | 5.444 | 6.786 |
| ເພີ່ມຂຶ້ນໃນປີ | - | 340 |
| ຄ່າຫຼຸ້ຍຫ້ຽນໃນປີ | (1.589) | (1.682) |
| **ຍອດເຫຼືອໃນວັນທີ 31 ທັນວາ** | **3.854** | **5.444** |

### ມູນຄ່າທີ່ຮັບຮູ້ໃນໃບລາຍງານຜົນການດຳເນີນງານ

| | 2021 | 2020 |
|---|---|---|
| | *(ລ້ານກີບ)* | *(ລ້ານກີບ)* |
| ດອກເບ້ຍໜີ້ສິນຕາມສັນຍາເຊົ່າ | 154 | 208 |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ | 1.589 | 1.682 |
| **ລວມ** | **1.743** | **1.890** |

## 10. ຊັບສິນອາກອນເຍື້ອນຊຳລະ

| | **1 ມັງກອນ 2020** (ລ້ານກີບ) | ຄ່າບໍລິການ/ໃຫ້ເຄຣດິດກັບ ໃບລາຍງານຜົນການດຳເນີນງານ (ລ້ານກີບ) | **31 ທັນວາ 2020** (ລ້ານກີບ) | ຄ່າບໍລິການ/ໃຫ້ເຄຣດິດກັບ ໃບລາຍງານຜົນການດຳເນີນງານ (ລ້ານກີບ) | **31 ທັນວາ 2021** (ລ້ານກີບ) |
|---|---|---|---|---|---|
| **ຊັບສິນອາກອນຍືນຊຳລະ** | | | | | |
| ເງິນແຮ | 3.147 | (3.147) | - | - | - |
| ອາກອນຍືນຊຳລະອື່ນໆ | - | 10 | 10 | (10) | - |
| | **3.147** | **(3.137)** | **10** | **(10)** | **-** |

## 11. ຊັບສິນອື່ນໆ

| | 2021 (ລ້ານກີບ) | 2020 (ລ້ານກີບ) |
|---|---|---|
| ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | 711 | 73 |
| ຈ່າຍລ່ວງໜ້າ | 722 | 579 |
| ໜີ້ຕ້ອງຮັບອື່ນໆ | 35.610 | 10.632 |
| | **37.043** | **11.284** |

## 12. ເງິນຝາກຂອງລູກຄ້າ

### ກ. ຈັດຕາມປະເພດຂອງເງິນຝາກ

| | 2021 (ລ້ານກີບ) | 2020 (ລ້ານກີບ) |
|---|---|---|
| ເງິນຝາກກະແສລາຍວັນ | 571.994 | 688.379 |
| ເງິນຝາກປະຢັດ | 8.655 | 2.473 |
| ເງິນຝາກມີກຳນົດ | 2.036 | 34.816 |
| ເງິນຝາກລໍຖ້າຮຽກເກັບຈາກລູກຄ້າລາຍຍ່ອຍ* | 3.770 | 6.470 |
| | **586.455** | **732.138** |

ເງິນຝາກເຫຼົ່ານີ້ສະແດງໃຫ້ເຫັນຍອດເງິນທີ່ລໍຖ້າຮຽກເກັບຈາກລູກຄ້າລາຍບຸກຄົນທີ່ມີຜົນມາຈາກການປິດການໃຫ້ບໍລິການແກ່ລູກຄ້າລາຍຍ່ອຍຂອງທະນາຄານ ເອເອັນແຊັດ ລາວ ຈຳກັດ. ຍອດຄົງເຫລືອເຫຼົ່ານີ້ໄດ້ຮັບການອະນຸມັດໂດຍ ທຫລ ໃຫ້ບັນທຶກ ແລະ ຕິດຕາມໃນບັນຊີລໍຖ້າຮຽກເກັບລູກຄ້າລາຍຍ່ອຍເປັນໄລຍະເວລາ 3 ປີຫລັງຈາກນັ້ນຈະໂອນເງິນທີ່ຍັງເຫລືອດັ່ງກ່າວເຂົ້າຄັງເງິນຂອງລັດຖະບານຖ້າລູກຄ້າບໍ່ຮຽກຮ້ອງຄືນ.

### ຂ. ຈັດຕາມປະເພດສະກຸນເງິນ

| | 2021 (ລ້ານກີບ) | 2020 (ລ້ານກີບ) |
|---|---|---|
| ກີບ | 64.806 | 185.317 |
| ໂດລາ | 461.950 | 518.917 |
| ບາດ | 58.324 | 24.905 |
| ອື່ນໆ | 1.375 | 2.999 |
| | **586.455** | **732.138** |

ຄ. ອັດຕາດອກເບ້ຍ (ຕໍ່ປີ)

| | 2021<br>% | 2020<br>% |
|---|---|---|
| ບັນຊີຝາກປະຢັດ | | |
| ລາວກີບ | 1,00% - 1,91% | 1,00% - 1,91% |
| ໂດລາສະຫະລັດ | 1,00% - 2,00% | 1,00% - 2,00% |
| ໄທບາດ | 0,50% - 2,00% | 0,50% - 2,00% |
| | | |
| ບັນຊີຝາກມີກຳນົດ | | |
| ລາວກີບ | 3,00% | 2.00% - 4.00% |
| ໂດລາສະຫະລັດ | 1,25% - 1,75% | 0.25% - 2.00% |
| ໄທບາດ | 1,25% - 1,75% | 0.50% - 2.50% |

## 13. ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ

ກ. ຈັດຕາມປະເພດຂອງເງິນຝາກ

| | 2021<br>*(ລ້ານກີບ)* | 2020<br>*(ລ້ານກີບ)* |
|---|---|---|
| ເງິນຝາກມີກຳນົດ | - | 9.234 |
| | **-** | **9.234** |

ຂ. ຈັດປະເພດຕາມທີ່ຢູ່ອາໃສ

| | 2021<br>*(ລ້ານກີບ)* | 2020<br>*(ລ້ານກີບ)* |
|---|---|---|
| ພາຍໃນປະເທດ | - | 9.234 |
| | **-** | **9.234** |

ຄ. ຈັດປະເພດຕາມສະກຸນເງິນ

| | 2021<br>*(ລ້ານກີບ)* | 2020<br>*(ລ້ານກີບ)* |
|---|---|---|
| ໄທບາດ | - | 9.234 |
| | **-** | **9.234** |

## 14. ໜີ້ສິນທາງອາກອນ

| | 2021 *(ລ້ານກີບ)* | 2020 *(ລ້ານກີບ)* |
|---|---|---|
| ອາກອນກຳໄລ | 8.789 | 2.115 |
| ອາກອນມູນຄ່າເພີ່ມ | 10 | 184 |
| ອາກອນຫັກໄວ້ນະທີ່ຈ່າຍ | 2 | 2 |
| ອາກອນເງິນເດືອນ | 623 | 358 |
| | **9.424** | **2.659** |

## 15 ໜີ້ສິນອື່ນໆ

| | ເອກະສານ ຊ້ອນທ້າຍ | 2021 *(ລ້ານກີບ)* | 2020 *(ລ້ານກີບ)* |
|---|---|---|---|
| ໜີ້ຕ້ອງຈ່າຍໃຫ້ບຸກຄະລາກອນ | | 382 | 204 |
| ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | | 20 | 49 |
| ໜີ້ຕ້ອງຈ່າຍອື່ນໆ | | 40.396 | 18.267 |
| | | **40.798** | **18.520** |

## 16 ທຶນຈົດທະບຽນຖອກແລ້ວ

ການເຄື່ອນໄຫວຂອງທຶນຈົດທະບຽນຖອກແລ້ວໃນລະຫວ່າງປີແມ່ນໄດ້ສະແດງດັ່ງລຸ່ມນີ້:

| | 2021 *(ລ້ານກີບ)* | 2020 *(ລ້ານກີບ)* |
|---|---|---|
| ຍອດເຫຼືອວັນທີ 1 ມັງກອນ | 300.000 | 150.000 |
| ການໂອນຈາກ ຍອດເຫຼືອຈາກທະນາຄານຕົວແທນ | - | 150.000 |
| ຍອດເຫຼືອວັນທີ 31 ທັນວາ | **300.000** | **300.000** |
| **ລວມທຶນທັງໝົດຂອງສາຂາ** | **300.000** | **300.000** |

*ອີງຕາມອະທິບາຍເລກທີ 1 ເຊິ່ງອະທິບາຍເຖິງການໂອນທຶນ

## 17 ຄັງສຳຮອງຕາມລະບຽບການ

ຄັງສຳຮອງຕາມລະບຽບການຕ້ອງໄດ້ຮັກສາໄວ້ໃນອັດຕາຢ່າງໜ້ອຍ 10% ຂອງກຳໄລໃນປີ ເພື່ອປະຕິບັດຕາມຂໍ້ ກຳນົດຂອງ ທຫລ. ສາຂາບັນທຶກກຳໄລສຳລັບປີ 58.207 ລ້ານກີບ (2020: 30.949 ລ້ານກີບ) ສະນັ້ນ, ສາຂາໄດ້ບັນທຶກຄັງສຳຮອງຕາມ ກົດໝາຍຈຳນວນ 5.821 ລ້ານກີບ ສຳລັບປີທີ່ສິ້ນສຸດໃນວັນທີ 31 ທັນວາ 2021. (2020: 3.095 ລ້ານກີບ).

## 18 ລາຍຮັບດອກເບ້ຍ

| | ສິ້ນສຸດປີ 31 ທັນວາ 2021 (ລ້ານກີບ) | ສິ້ນສຸດປີ 31 ທັນວາ 2020 (ລ້ານກີບ) |
|---|---|---|
| ດອກເບ້ຍເງິນກູ້ ແລະ ຮັບລ່ວງໜ້າ | | |
| ເງິນເບີກເກີນບັນຊີ | 1.212 | 686 |
| ເງິນກູ້ມີກຳນົດ | 24.218 | 19.086 |
| | **25.430** | **19.772** |

## 19 ລາຍຈ່າຍດອກເບ້ຍ

| | ສິ້ນສຸດປີ 31 ທັນວາ 2021 (ລ້ານກີບ) | ສິ້ນສຸດປີ 31 ທັນວາ 2020 (ລ້ານກີບ) |
|---|---|---|
| ດອກເບ້ຍເງິນຝາກ | | |
| ເງິນຝາກປະຢັດ | 1.885 | 1.494 |
| ເງິນຝາກມີກຳນົດ | 76 | 559 |
| | **1.961** | **2.053** |

## 20 ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ສຸດທິ

| | ສິ້ນສຸດປີ 31 ທັນວາ 2021 (ລ້ານກີບ) | ສິ້ນສຸດປີ 31 ທັນວາ 2020 (ລ້ານກີບ) |
|---|---|---|
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | | |
| ຄ່າທຳນຽມທີ່ກ່ຽວກັບເງິນໃຫ້ກູ້ຢືມ | 177 | 258 |
| ຄ່າທຳນຽມ - ບັນຊີກະແສລາຍວັນ | - | 91 |
| ຄ່າບໍລິການ ລະຫວ່າງປະເທດ | 4.576 | 4.480 |
| ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ | 165 | 446 |
| **ລວມລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ** | **4.918** | **5.274** |
| ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | | |
| ຄ່າທຳນຽມທະນາຄານ | (415) | (357) |
| ຄ່າທຳນຽມ - ບັນຊີກະແສລາຍວັນ | (44) | (36) |
| **ລວມລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ** | **(459)** | **(393)** |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ, ສຸດທິ** | **4.459** | **4.881** |

## 21 ອາກອນກຳໄລ

*ການຮັບຮູ້ອາກອນກຳໄລ ໃນລາຍງານຜົນການດຳເນີນງານ*

| | ເອກະສານຊ້ອນທ້າຍ | ສິ້ນສຸດປີ 31 ທັນວາ 2021 *(ລ້ານກີບ)* | ສິ້ນສຸດປີ 31 ທັນວາ 2020 *(ລ້ານກີບ)* |
|---|---|---|---|
| **ລາຍຈ່າຍອາກອນ ໃນປະຈຸບັນ** | | | |
| ໃນປີ | | (14.728) | (5.172) |
| ລາຍການທີ່ບໍ່ຖືກຫັກອາກອນ | | (278) | - |
| ການດັດແກ້ໃນປີທີ່ແລ້ວ | | (468) | (159) |
| | | **(15.474)** | **(5.331)** |
| **ລາຍຈ່າຍອາກອນເຍື່ອນຊຳລະ (ຜົນປະໂຫຍດ)** | | | |
| ລາຍການເຄື່ອນໄຫວຜິດດ່ຽງຊົ່ວຄາວ | *10* | (10) | (3.137) |
| **ລາຍຈ່າຍອາກອນ ໃນປະຈຸບັນ** | | **(15.484)** | **(8.468)** |

*ສົມທຽບອັດຕາອາກອນທີ່ມີຜົນບັງຄັບໃຊ້*

| | ທ້າຍເດືອນ 31 ທັນວາ 2021 ອັດຕາ (%) | ທ້າຍເດືອນ 31 ທັນວາ 2021 *(ລ້ານກີບ)* | ທ້າຍເດືອນ 31 ທັນວາ 2020 ອັດຕາ (%) | ທ້າຍເດືອນ 31 ທັນວາ 2020 *(ລ້ານກີບ)* |
|---|---|---|---|---|
| ກຳໄລກ່ອນຈ່າຍອາກອນກຳໄລ | | 73.691 | | 39.417 |
| ອັດຕາອາກອນກຳໄລທີ່ໃຊ້ຢູ່ໃນ ສປປ ລາວ | 20% | (14.738) | 20% | (7.883) |
| ລາຍການທີ່ບໍ່ຖືກຫັກອາກອນ | | (278) | | 292 |
| ຄວາມແຕກຕ່າງຂອງອັດຕາອາກອນ | | - | | (758) |
| ການດັດແກ້ອາກອນໃນປີທີ່ແລ້ວ | | (468) | | (159) |
| ອື່ນໆ | | - | | 40 |
| ຜົນກະທົບຈາກອັດຕາອາກອນ | **21.01%** | **(15.484)** | **27.48%** | **(8.468)** |

ລາຍຈ່າຍອາກອນກຳໄລແມ່ນຄິດໄລ່ໃນອັດຕາ 20% ຂອງກຳໄລທີ່ຖືກອາກອນ. ການຄິດໄລ່ອາກອນກຳໄລ ແມ່ນຕ້ອງໄດ້ຮັບການກວດກາ ແລະ ອະນຸມັດໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

## 22 ເງິນສົດ ແລະ ທຽບເທົ່າເງິນສົດ

| | ເອກະສານ ຊ້ອນທ້າຍ | 2021 *(ລ້ານກີບ)* | 2020 *(ລ້ານກີບ)* |
|---|---|---|---|
| ເງິນສົດ | *4* | 10.065 | 5.076 |
| ເງິນຝາກຢູ່ທະນາຄານແຫ່ງ ສປປລ | *6* | 43.120 | 27.479 |
| ເງິນຝາກຢູ່ສຳນັກງານໃຫຍ່ ແລະ ສາຂາອື່ນ | | 1.956 | 96.192 |
| ເງິນຝາກຢູ່ທະນາຄານອື່ນ | | 279.266 | 404.071 |
| | | **334.407** | **532.818** |

## 23 ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງປະກອບດ້ວຍການເຄື່ອນໄຫວທັງໝົດທີ່ດຳເນີນງານໂດຍພາກສ່ວນອື່ນທີ່ກ່ຽວຂ້ອງກັບທະນາຄານ, ພາກສ່ວນທີ່ຈະກ່ຽວຂ້ອງກັບທະນາຄານ ຖ້າຫາກວ່າ:

(ກ) ມີການພົວພັນທາງກົງ ຫຼື ທາງອ້ອມໂດຍຜ່ານໜຶ່ງ ຫຼື ຫຼາຍຄົນກາງທີ່ກ່ຽວຂ້ອງ:
- ຄວບຄຸມ, ຖືກຄວບຄຸມໂດຍ ຫຼື ຢູ່ພາຍໃຕ້ການຄວບຄຸມດຽວກັນກັບທະນາຄານ (ໃນນີ້ລວມມີ ບໍລິສັດແມ່, ບໍລິສັດຍ່ອຍ ແລະ ສະມາຊິກຂອງບໍລິສັດຍ່ອຍ);
- ມີສ່ວນໄດ້ເສຍໃນທະນາຄານ ທີ່ມີອິດທິພົນສູງຕໍ່ທະນາຄານ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມທະນາຄານ,

(ຂ) ພາກສ່ວນທີ່ເປັນຜູ້ຮ່ວມທຶນເຊິ່ງໃນນັ້ນທະນາຄານເປັນຮຸ້ນສ່ວນ;

(ຄ) ບຸກຄົນນັ້ນທີ່ເປັນສະມາຊິກຄົນສຳຄັນໃນຄະນະຜູ້ບໍລິຫານຂອງທະນາຄານ ຫຼື ບໍລິສັດແມ່;

(ງ) ບຸກຄົນນັ້ນເປັນສະມາຊິກໃນຄອບຄົວຂອງບຸກຄົນໃດໜຶ່ງ ທີ່ອ້າງເຖິງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນທີ່ເປັນທະນາຄານຄວບຄຸມ, ຄວບຄຸມຮ່ວມກັນ ຫຼື ມີອິດທິພົນສູງໂດຍ ຫຼື ອຳນາດໃນການອອກສຽງລົງຄະແນນຢ່າງມີສາລະສຳຄັນ ໃນທະນາຄານ ດັ່ງກ່າວ ທີ່ມີສ່ວນກ່ຽວຂ້ອງ ໂດຍທາງກົງ ຫຼື ທາງອ້ອມ ຫຼື ບຸກຄົນໃດໜຶ່ງ ທີ່ອ້າງເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ບຸກຄົນທີ່ຢູ່ໃນແຜນການຜົນປະໂຫຍດຂອງພະນັກງານຫຼັງອອກຈາກວຽກເພື່ອປະໂຫຍດຂອງພະນັກງານທະນາຄານ ຫຼື ຂອງທະນາຄານອື່ນ ທີ່ເປັນພາກສ່ວນທີ່ກ່ຽວຂ້ອງກັນຂອງທະນາຄານ,

ລາຍການເຄື່ອນໄຫວທີ່ມີສາລະສຳຄັນ ໃນໃບລາຍງານຜົນການດຳເນີນງານ ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

| **ພາກສ່ວນທີ່ກ່ຽວຂ້ອງ** | **ການກ່ຽວຂ້ອງ** | **ການກ່ຽວຂ້ອງ** | **2021** *(ລ້ານກີບ)* | **2020** *(ລ້ານກີບ)* |
|---|---|---|---:|---:|
| ທະນາຄານ ເອເອັນແຊັດ - ສິງກະໂປ | ກຸ່ມທຸລະກິດ | ລາຍຮັບດອກເບ້ຍ | 16 | 320 |
| ທະນາຄານ ເອເອັນແຊັດ - ສິງກະໂປ | ກຸ່ມທຸລະກິດ | ລາຍຮັບດອກເບ້ຍ | 33 | 93 |
| ທະນາຄານ ເອເອັນແຊັດ(ລາວ) - ທຸລະກິດຍ່ອຍ | ກຸ່ມທຸລະກິດຍ່ອຍ | ລາຍຈ່າຍດອກເບ້ຍ | - | 4.832 |
| ທະນາຄານ ເອເອັນແຊັດ - ເມລເບີນ | ສຳນັກງານໃຫຍ່ | ລາຍຈ່າຍກຸ່ມຕ່າງປະເທດ | 3.732 | 7.396 |
| ທະນາຄານ ເອເອັນແຊັດ- ສູນກາງມະນີລາ | ກຸ່ມທຸລະກິດ | ລາຍຈ່າຍກຸ່ມຕ່າງປະເທດ | 177 | 481 |
| ທະນາຄານ ເອເອັນແຊັດ- ສູນກາງບັງກະລໍ | ກຸ່ມທຸລະກິດ | ລາຍຈ່າຍກຸ່ມຕ່າງປະເທດ | 419 | 448 |

ຍອດເຫຼືອທີ່ມີສາລະສໍາຄັນໃນໃບສະຫຼຸບຊັບສິນບັດກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

| **ພາກສ່ວນທີ່ກ່ຽວຂ້ອງ** | **ການກ່ຽວຂ້ອງ** | **ການກ່ຽວຂ້ອງ** | **31 ທັນວາ 2021 *(ລ້ານກີບ)*** | **31 ທັນວາ 2020 *(ລ້ານກີບ)*** |
|---|---|---|---|---|
| ທະນາຄານ ເອເອັນແຊັດ - ສິງກະໂປ | ກຸ່ມທຸລະກິດ | ຊັບສິນ - ໜີ້ຕ້ອງຮັບ | - | 92.524 |
| ທະນາຄານ ເອເອັນແຊັດ – ຟີລິບປິນ | ກຸ່ມທຸລະກິດ | ຊັບສິນ – ຊັບສິນອື່ນໆ | - | 437 |
| ທະນາຄານ ເອເອັນແຊັດ - ເມລເບິລ | ສໍານັກງານໃຫຍ່ | ໜີ້ສິນ-ໜີ້ຕ້ອງສົ່ງ | 1.173 | 1.600 |
| ທະນາຄານ ເອເອັນແຊັດ- ສູນກາງມະນີລາ ແລະສູນກາງບັງກະລໍ່ | ກຸ່ມທຸລະກິດ | ໜີ້ສິນ-ໜີ້ຕ້ອງສົ່ງ | - | 170 |

ຄ່າຕອບແທນໃຫ້ແກ່ຄະນະອໍານວຍການ ແລະ ຄະນະຜູ້ບໍລິຫານມີດັ່ງນີ້:

| | ສິ້ນສຸດປີ 31 ທັນວາ 2021 *(ລ້ານກີບ)* | ສິ້ນສຸດປີ 31 ທັນວາ 2020 *(ລ້ານກີບ)* |
|---|---|---|
| ເງິນເດືອນ | 8.097 | 8.141 |
| ເງິນໂບນັດ | 1.333 | 550 |
| ເງິນອຸດໜູນອື່ນໆ | 1.263 | - |
| | **10.693** | **8.691** |

## 24 ພາລະຜູກພັນ

ໃນພາກປະຕິບັດຂອງການດໍາເນີນທຸລະກິດ, ທາງສາຂາໄດ້ມີພາລະຜູກພັນຕ່າງໆ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນທີ່ແນ່ນອນທາງດ້ານກົດໝາຍໃຫ້ກັບລູກຄ້າຂອງຕົນ. ຄາດວ່າຈະບໍ່ເກີດຄວາມເສຍຫາຍທີ່ມີສາລະສໍາຄັນ ຈາກລາຍການດັ່ງກ່າວ ຊຶ່ງປະກອບດ້ວຍ:

| | 2021 *(ລ້ານກີບ)* | 2020 *(ລ້ານກີບ)* |
|---|---|---|
| ໜັງສືຄໍ້າປະກັນທີ່ຍັງຄ້າງຊໍາລະ | 589 | 1.415 |
| ໜັງສືສິນເຊື່ອທີ່ຍັງຄ້າງຊໍາລະ | 112.443 | 68.939 |
| ຂໍ້ຜູກພັນທາງສັນຍາອື່ນໆ | 604.893 | 708.210 |
| ອື່ນໆ | 39.032 | - |
| | **756.957** | **778.564** |

## 25 ເຫດການທີ່ເກີດຂຶ້ນພາຍຫຼັງວັນທີໃນໃບສະຫຼຸບຊັບສົມບັດ

ນອກເໜືອຈາກຂໍ້ມູນທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນ, ໃນມື້ທີ່ເອກະສານລາຍງານການເງິນ, ໄດ້ຖືກສ້າງຂຶ້ນບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2021 ທີ່ສົ່ງຜົນກະທົບອັນໃຫຍ່ຫຼວງຕໍ່ຖານະທາງການເງິນຂອງທະນາຄານ ໃນວັນທີ 31 ທັນວາ 2021.

## 26 ການປະຕິຮູບອັດຕາດອກເບ້ຍມາດຕະຖານ

ອັດຕາສະເໜີໃຫ້ລະຫວ່າງທະນາຄານ (IBORs) ເຊັ່ນ: ອັດຕາສະເໜີລະຫວ່າງທະນາຄານກາງລອນດອນ (LIBOR) ໄດ້ມີບົດບາດສຳຄັນໃນຕະຫຼາດການເງິນທົ່ວໂລກ, ເປັນອັດຕາອ້າງອີງສຳລັບ ຕາສານອະນຸພັນ, ເງິນກູ້ ແລະ ຫຼັກຊັບ ແລະ ໃນການປະເມີນມູນຄ່າຂອງເຄື່ອງມືທາງດ້ານການເງິນ.

ຄວາມບໍ່ແນ່ນອນກ່ຽວກັບຄວາມສົມບູນຂອງອັດຕາ IBOR ໄດ້ເຮັດໃຫ້ຜູ້ຄວບຄຸມ ແລະ ອຸດສາຫະກຳຫັນອອກຈາກ IBOR ໄປສູ່ອັດຕາອ້າງອີງດັດຊະນີທີ່ບໍ່ມີຄວາມສ່ຽງທາງເລືອກ (RFRs).

ການພັດທະນາຜະລິດຕະພັນ RFR ໃໝ່ ແລະ ການຍ້າຍຖິ່ນຂອງສັນຍາທີ່ມີຢູ່ຂອງສາຂາທີ່ອ້າງອີງ IBORs ໄປສູ່ RFRs ໄດ້ເປີດເຜີຍໃຫ້ສາຂາເຫັນເຖິງຄວາມສ່ຽງທາງດ້ານການເງິນ, ການປະຕິບັດຕາມ, ທາງດ້ານກົດໝາຍ ແລະ ການດຳເນີນງານ. ສາຂາແມ່ນກຳລັງປ່ຽນແປງຫັນປ່ຽນໄປສູ່ RFRs ແລະ ຄວາມສ່ຽງເຫຼົ່ານີ້ ໂດຍຜ່ານໂຄງການ Benchmark Transition Program (ໂປຣແກຣມ) ທີ່ຕັ້ງຂຶ້ນໂດຍກຸ່ມ, ເຊິ່ງຖືກຄວບຄຸມໂດຍຄະນະກຳມະການຜູ້ອາວຸໂສຂອງຜູ້ບໍລິຫານລະດັບສູງ. ໂປຣແກຣມນີ້ໄດ້ສະໜອງການປັບປຸງເປັນປະຈຳໃຫ້ແກ່ຄະນະກຳມະການບໍລິຫານ ແລະ ຄະນະກຳມະການບໍລິຫານຄວາມສ່ຽງ.

ການປັບແກ້ IBOR ມີຜົນກະທົບຢ່າງກວ້າງຂວາງສຳລັບສາຂາ ແລະ ລູກຄ້າຂອງພວກເຮົາເນື່ອງຈາກຄວາມແຕກຕ່າງພື້ນຖານລະຫວ່າງ IBOR ແລະ RFRs. RFRs ແມ່ນເປັນທັງການເບິ່ງຄືນໃນອັດຕາການຄ້າງຈ່າຍ (ສຳລັບບາງສະກຸນເງິນ) ແລະ ເປັນອັດຕາການຄາດຄະເນລ່ວງໜ້າ. ຄວາມແຕກຕ່າງທີ່ສຳຄັນລະຫວ່າງ IBORs ແລະ RFRs ມີຄື: ອັດຕາ IBORs ລວມມີ ຄ່າປະກັນໄພ ແລະ ຄວາມສ່ຽງດ້ານສິນເຊື່ອຂອງທະນາຄານ, ໃນຂະນະທີ່ RFRs ບໍ່ມີ. ເປັນຜົນມາຈາກຄວາມແຕກຕ່າງເຫຼົ່ານີ້, ການປັບແກ້ແມ່ນຕ້ອງການ RFR ເພື່ອຮັບປະກັນວ່າສັນຍາອ້າງອີງຕາມອັດຕາ IBOR ,ການປ່ຽນແປງແປງບົນພື້ນຖານທີ່ສົມທຽບທາງທາງເສດຖະກິດ.

ໂປຣແກຣມປະກອບມີ ການກຳນົດສັນຍາ IBOR ທີ່ຖືກກະທົບໃນທົ່ວກຸ່ມ (ລວມທັງສາຂາ), ການປະຕິບັດທີ່ຈຳເປັນເພື່ອພັດທະນາຄວາມສາມາດຂອງຜະລິດຕະພັນ ແລະ ການຫັນປ່ຽນຈາກສັນຍາທີ່ມີຢູ່ໄປສູ່ RFRs. ນີ້ປະກອບມີການປະເມີນ ແລະ ການຫຼຸດຜ່ອນຄວາມສ່ຽງດ້ານການເງິນ, ທາງດ້ານກົດໝາຍ ແລະ ການປະພຶດທີ່ເກີດຂຶ້ນຈາກການປ່ຽນແປງລາຄາ ແລະ ການປະເມີນມູນຄ່າ (ຄວາມສ່ຽງຕໍ່ອັດຕາດອກເບ້ຍສ່ວນໃຫຍ່), ຄວາມສ່ຽງຕໍ່ການປະຕິບັດຕາມທີ່ເກີດຂຶ້ນຈາກການບໍ່ປະຕິບັດຕາມຂໍ້ກຳນົດທີ່ກ່ຽວຂ້ອງ, ຄວາມສ່ຽງທາງດ້ານກົດໝາຍທີ່ເກີດຂຶ້ນຈາກການປ່ຽນແປງສັນຍາຂອງລູກຄ້າ ແລະ ຄວາມສ່ຽງໃນການດຳເນີນງານລວມທັງການປ່ຽນແປງລະບົບ IT, ການຄວບຄຸມແລະການລາຍງານໂຄງສ້າງພື້ນຖານ. ພາຍໃຕ້ການປະຕິບັດຕາມການປ່ຽນແປງເຫຼົ່ານີ້, ກຸ່ມບໍລິສັດໄດ້ມີສ່ວນຮ່ວມຢ່າງຫ້າວຫັນກັບອົງການກົດລະບຽບຕ່າງໆໃນຫຼາຍໆປະເທດທີ່ກຸ່ມດຳເນີນການກ່ຽວກັບຄວາມພ້ອມໃນການປ່ຽນແປງ IBOR ຂອງພວກເຮົາ. ຈາກທັດສະນະຂອງອຸດສາຫະກຳ, ກຸ່ມບໍລິສັດຍັງມີ

ສ່ວນຮ່ວມຢ່າງຫ້າວຫັນໃນ, ແລະປະກອບສ່ວນໃຫ້, ຫນ່ວຍງານ RFR ຕ່າງໆ, ສະມາຄົມອຸດສາຫະກຳ ແລະ ກອງປະຊຸມທຸລະກິດທີ່ສຸມໃສ່ລັກສະນະທີ່ແຕກຕ່າງກັນຂອງການປັບແກ້ອັດຕາດອກເບ້ຍ.

ໂປຣແກຣມຍັງລວມເຖິງ ການຄຸ້ມຄອງຜົນກະທົບຕໍ່ລູກຄ້າ. ສາຂາມີຄວາມຄືບໜ້າເປັນຢ່າງດີໃນການຮັບປະກັນແຜນການຫັນປ່ຽນຂອງລູກຄ້າທັງໝົດໃຫ້ສຳເລັດກ່ອນມື້ສິ້ນສຸດຂອງ IBOR. ກ່ຽວຂ້ອງກັບການກູ້ຢືມເງິນ ແລະ ລູກຄ້າຂອງທະນາຄານຂອງພວກເຮົາ, ສາຂາໄດ້ເລີ່ມຕົ້ນໂຄງການຢ່າງຫ້າວຫັນເພື່ອຮັບປະກັນວ່າ ການເຄື່ອນຍ້າຍຢ່າງເປັນລະບຽບ ແລະ ການຈັດການທີ່ດີກັບໄປສູ່ RFRs. ສາຂາກຳລັງວາງແຜນທີ່ຈະສືບຕໍ່ຂະຫຍາຍ ແລະ ສິ່ງຊຸດຜະລິດຕະພັນ RFR ແລະ ທາງເລືອກລາຄາຂອງຕົນເພື່ອໃຫ້ສາມາດສະໜັບສະໜູນລູກຄ້າຂອງພວກເຮົາຕາມກົດລະບຽບການທີ່ວາງອອກ.

*ການປ່ຽນແປງມາດຕະຖານການບັນຊີ*

ໃນປີ 2018, ເນື່ອງຈາກຄວາມບໍ່ແນ່ນອນທີ່ກ່ຽວຂ້ອງກັບຄວາມເປັນໄປໄດ້ໃນໄລຍະຍາວຂອງ IBORs, ຄະນະກຳມະການມາດຕະຖານການບັນຊີສາກົນ (IASB) ໄດ້ເລີ່ມການທົບທວນຜົນກະທົບຂອງການປັບແກ້ຕໍ່ການລາຍງານການເງິນ, ເນື່ອງຈາກອາດຈະຜົນສະທ້ອນທີ່ອາດຈະເກີດຂຶ້ນຢ່າງໃຫຍ່ຫຼວງຕໍ່ ການບັນຊີເຄື່ອງມືທາງດ້ານການເງິນ.

ໃນເດືອນກັນຍາ 2019, IASB ໄດ້ເຜີຍແຜ່ *ການປະຕິຮູບອັດຕາດອກເບ້ຍ Benchmark - ໄລຍະ 1*, ເຊິ່ງໄດ້ປັບປຸງຂໍ້ກຳນົດການປ້ອງກັນຄວາມສ່ຽງທາງບັນຊີທີ່ມີຢູ່ແລ້ວບາງຢ່າງ ເພື່ອສະຫນອງການບັນເທົາຜ່ອນຜົນກະທົບທີ່ອາດເກີດຂຶ້ນຈາກຄວາມບໍ່ແນ່ນອນທີ່ເກີດຈາກການປະຕິຮູບອັດຕາດອກເບ້ຍ. ການແກ້ໄຂແມ່ນບໍ່ມີຜົນກະທົບທີ່ສຳຄັນຕໍ່ສາຂາ.

ໃນເດືອນສິງຫາ 2020, IASB ໄດ້ເຜີຍແຜ່ *ການປະຕິຮູບອັດຕາດອກເບ້ຍ Benchmark - ໄລຍະ 2*, ເຊິ່ງແກ້ໄຂ IFRS 9 ເຄື່ອງມືທາງດ້ານການເງິນ, IAS 39 ເຄື່ອງມືທາງດ້ານການເງິນ: ການຮັບຮູ້ ແລະ ການວັດແທກ, IFRS 7 ເຄື່ອງມືທາງດ້ານການເງິນ: ການເປີດເຜີຍ, IFRS 4 ສັນຍາປະກັນໄພ ແລະ IFRS 16 ສັນຍາເຊົ່າ. ເຊິ່ງກຸ່ມ (ລວມທັງສາຂາ) ໄດ້ຮັບຮອງເອົາແຕ່ວັນທີ 1 ເມສາ 2021 ເປັນຕົ້ນໄປ.

ການແກ້ໄຂ IASB ນີ້ໄດ້ແກ້ໄຂບັນຫາທີ່ອາດຈະສົ່ງຜົນກະທົບຕໍ່ສາຂາໃນດ້ານການປ່ຽນແປງຈາກອັດຕາ IBOR ທີ່ມີຢູ່ແລ້ວໄປສູ່ RFR, ລວມທັງຜົນກະທົບຂອງການປ່ຽນແປງກະແສເງິນສົດຕາມສັນຍາ ຫຼື ຄວາມສຳພັນຂອງການປ້ອງກັນຄວາມສ່ຽງ. ມາດຕະຖານລວມມີການປັບປຸງກ່ຽວກັບການ:

- ການດັດແກ້ຊັບສິນທາງດ້ານການເງິນ ຫຼື ໜີ້ສິນທາງການເງິນທີ່ວັດແທກດ້ວຍຕົ້ນທຶນຕັດຫນີ້: ການປະຕິຮູບ IBOR ຄາດວ່າຈະສົ່ງຜົນເຮັດໃຫ້ມີການປ່ຽນແປງໃນການກຳນົດກະແສເງິນສົດຕາມສັນຍາຂອງຊັບສິນ ແລະ ໜີ້ສິນຂອງສາຂາ. ມາດຕະຖານໃຫ້ຄວາມເໝາະສົມໃນການປະຕິບັດເພື່ອບັນຊີການປ່ຽນແປງພື້ນຖານໃນການກຳນົດກະແສເງິນສົດຕາມສັນຍາໂດຍການປັບປຸງອັດຕາດອກເບ້ຍທີ່ມີປະສິດທິພາບ. ດັ່ງນັ້ນ, ບໍ່ມີການຮັບຮູ້ ຫຼື ສູນເສຍທັນທີທັນໃດ. ນີ້ໃຊ້ພຽງແຕ່ໃນເວລາທີ່ການປ່ຽນແປງແມ່ນຜົນສະທ້ອນໂດຍກົງຂອງການປະຕິຮູບ IBOR, ແລະພື້ນຖານໃຫມ່ສຳລັບການກຳນົດກະແສເງິນສົດຕາມສັນຍາ ແມ່ນສະພາບເສດຖະກິດທຽບກັບໄລຍະທີ່ຜ່ານມາ;

- ຂໍ້ກຳນົດການເປີດເຜີຍເພີ່ມເຕີມ: ມາດຕະຖານດັດແກ້ AASB 7 ເຄື່ອງມືທາງດ້ານການເງິນ: ການເປີດເຜີຍທີ່ຮຽກຮ້ອງໃຫ້ມີການເປີດເຜີຍດ້ານຄຸນນະພາບ ແລະ ປະລິມານ ເພີ່ມເຕີມທີ່ກ່ຽວຂ້ອງກັບຜົນກະທົບຂອງການປະຕິຮູບ IBOR ຕໍ່ສາຂາ. ການເປີດເຜີຍເຫຼົ່ານີ້ແມ່ນມີຢູ່ໃນບັນທຶກນີ້.

*ຜົນກະທົບທາງດ້ານການເງິນຂອງ ການປະຕິຮູບ IBOR*

ຕໍ່ໄປນີ້ໄດ້ກຳນົດການປະເມີນຜົນກະທົບຂອງສາຂາທີ່ກ່ຽວຂ້ອງກັບການປະຕິຮູບ IBOR ໃນວັນທີ 31 ທັນວາ 2021:

i) ຜົນກະທົບສຳລັບປີສິ້ນສຸດໃນວັນທີ 31 ທັນວາ 2021

ສຳລັບປີສິ້ນສຸດ ໃນວັນທີ 31 ເດືອນທັນວາ 2021, ແມ່ນບໍ່ມີຜົນກະທົບຕໍ່ກຳໄລສຸດທິຂອງສາຂາຫຼັງຈາກພາສີທີ່ເກີດຂຶ້ນຈາກການປະຕິຮູບ IBOR.

ii) ການເປີດເຜີຍແມ່ນຂຶ້ນກັບການປະຕິຮູບມາດຕະຖານໃນວັນທີ 31 ທັນວາ 2021

ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນການເປີດເຜີຍຂອງສາຂາຕໍ່ກັບດັດຊະນີອັດຕາດອກເບ້ຍທີ່ຂຶ້ນກັບການປະຕິຮູບ IBOR. ເຄື່ອງມືທາງການເງິນເຫຼົ່ານີ້ແມ່ນເຮັດສັນຍາອ້າງອີງເຖິງມາດຕະຖານ IBOR ທີ່ໄດ້ວາງແຜນທີ່ຈະປ່ຽນໄປສູ່ RFR, ແລະມີມື້ຄົບກຳນົດຂອງສັນຍາເກີນກວ່າມື້ສິ້ນສຸດຂອງ IBOR ທີ່ວາງແຜນໄວ້

| | ເຄື່ອງມືທາງການເງິນທີ່ຍັງບໍ່ໄດ້ຫັນສູ່ RFRs | | | |
|---|---|---|---|---|
| | USD Libor | THB Libor | GBP Libor | ອື່ນໆ[1] |
| 31 ທັນວາ 2021 | ລ້ານກີບ | ລ້ານກີບ | ລ້ານກີບ | ລ້ານກີບ |
| ເງິນກູ້ ແລະ ເງິນກູ້ລ່ວງໜ້າ[2] | 19.635 | - | - | - |
| ພາລະຜູກພັນເງິນກູ້[2] | 1.292 | - | - | - |

[1]ປະກອບດ້ວຍເຄື່ອງມືທາງດ້ານການເງິນທີ່ອ້າງອີງເຖິງອັດຕາມາດຕະຖານທີ່ສຳຄັນອື່ນໆທີ່ມີການຢຸດເຊົາແຕ່ຍັງປ່ຽນໄປສູ່ມາດຕະຖານທາງເລືອກ.

[2] ບໍ່ລວມການສູນເສຍສິນເຊື່ອທີ່ຄາດໄວ້ (ECL).

iii) ການພັດທະນາໃນອະນາຄົດ

ເນື່ອງຈາກຜູ້ຄຸ້ມຄອງດັດຊະນີ USD LIBOR ທີ່ຖືກອ້າງອີງຢ່າງກວ້າງຂວາງທີ່ສຸດ ເຊິ່ງຈະສືບຕໍ່ເຜີຍແຜ່ເຖິງ 30 ມິຖຸນາ 2023, ໂຄງການການຫັນປ່ຽນຂອງກຸ່ມສະໜັບສະໜູນລູກຄ້າຂອງພວກເຮົາ ແລະ ກິດຈະກຳການຄຸ້ມຄອງຄວາມສ່ຽງຂອງຕົນເອງຈະຍັງສືບຕໍ່ປີ 2021 ແລະ ຕໍ່ໆໄປ.